ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບົດສະຫຼຸບ ການເຄື່ອນໄຫວວຽກງານ 5 ປີ (2021-2025) ແລະ ທິດທາງ ແຜນການ 5 ປີ (2026-2030) ຂອງ ຫ້ອງການກອງທຶນປົກປັກຮັກສາ ສິ່ງແວດລ້ອມ ແລະ ປ່າໄມ້

ມີນາ 2026

ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້
ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ຄຳນຳ

ແຜນການ 5 ປີ (2026-2030) ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ (ກສປ) ສ້າງຂຶ້ນເພື່ອຈັດຕັ້ງ ຜັນຂະ ຫຍາຍ ວິໃສທັດ ແລະ ຍຸດທະສາດ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແລະ ປະກອບສ່ວນຢ່າງຕັ້ງໜ້າໃນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງກະສິກຳ ແລະ ສິ່ງແວດລ້ອມ 5 ປີ ຄັ້ງທີ X (2026-2030) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030). ແຜນການ 5 ປີ ໃນຄັ້ງນີ້ແມ່ນແນໃສ່ເສີມຂະຫຍາຍດ້ານດີ, ແກ້ໄຂຈຸດອ່ອນຂໍ້ຄົງຄ້າງ ແລະ ຖອດຖອນບົດຮຽນການຈັດຕັ້ງປະຕິບັດວຽກງານ ໃນ 5 ປີ ຜ່ານມາ ພ້ອມທັງກຳນົດທິດທາງ ແຜນການເຄື່ອນໄຫວໃນ 5 ປີ ຕໍ່ໜ້າ ໂດຍການສືບຕໍ່ສຸມໃສ່ ການຈັດຕັ້ງປະຕິບັດພາລະບົດບາດຂອງຫ້ອງການກອງທຶນໃນການ ລະດົມຂົນຂວາຍທຶນຈາກພາຍໃນ ແລະ ສາກົນ, ສະສົມທຶນ, ສະໜອງທຶນ, ໃຫ້ບໍລິການໃນການຄຸ້ມຄອງ-ບໍລິຫານງົບປະມານ ແລະ ພັດທະນາກອງທຶນກ້າວເຂົ້າເປັນອົງກອນແຫ່ງຊາດໃນການເຂົ້າເຖິງແຫລ່ງທຶນສາກົນດ້ານການປ່ຽນດິນຟ້າອາກາດສີຂຽວ ໄດ້ໂດຍກົງ (Green Climate Fund "GCF") ເພື່ອຮັບປະກັນ **"ສ້າງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃຫ້ເປັນກົນໄກການເງິນທີ່ຍືນຍົງ ແລະ ມີມາດຕະຖານທຽບເທົ່າສາກົນ"**

ໂດຍອີງໃສ່ທ່າແຮງ, ບົດຮຽນທີ່ຖອດຖອນໄດ້ໃນການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ແລະ ການຮ່ວມມືກັບພາກສ່ວນກ່ຽວຂ້ອງ ທັງພາຍໃນ ແລະ ສາກົນ ຈຶ່ງສາມາດກຳນົດໄດ້ຄາດໝາຍສູ້ຊົນ ແລະ ວຽກງານຈຸດສຸມ ຂອງຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ຮອດປີ 2030 ຄື: ສ້າງຄວາມເຂັ້ມແຂງ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ວຽກງານການຄຸ້ມຄອງບໍລິຫານການເງິນສິ່ງແວດລ້ອມ ແລະ ປ່າໄມ້ ໃຫ້ສຳເລັດຕາມແຜນງົບປະມານ 95% ຕໍ່ປີ, ຮ່ວມມືພາຍໃນ ແລະ ສາກົນ ເພື່ອສ້າງສາຍພົວພັນ ແລະ ເສີມຂະຫຍາຍສາຍພົວພັນຮ່ວມມື ໃນການລະດົມທຶນ ໃນລະດັບພາກພື້ນ ແລະ ສາກົນ ເປັນຕົ້ນ WB, GIZ, UNDP, UNEP, GCF, GEF, EU, GGGI, ສະໜອງທຶນໃຫ້ກັບພາກສ່ວນຕາມຕາມນະໂຍບາຍສະໜອງທຶນໃຫ້ບັນລຸສະເລ່ຍ 35 ຕື້ກີບຕໍ່ປີ, ປະຕິບັດການລະດົມທຶນຈາກພາຍໃນໃຫ້ບັນລຸ 47 ລ້ານໂດລາສະຫະລັດໃນ 5 ປີ ແລະ ລະດົມທຶນຈາກສາກົນໃຫ້ບັນລຸ 30 ລ້ານໂດລາສະຫະລັດໃນ 5 ປີ , ພັດທະນາ ລະບົບການຄຸ້ມຄອງການເງິນ ແບບທັນສະໄໝ ເພື່ອເພີ່ມທະວີ ຄວາມສະດວກສະບາຍ ໃນການປະສານງານ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ແລະ ປັບປຸງ ລະບົບໂປແກຼມບັນຊີ ທຶນພາຍໃນ ແລະ ສາກົນ ໃນການຜະລິດບົດລາຍງານດ້ານການເງິນຖືກຕ້ອງ100% ພ້ອມນັ້ນກໍສຶກສາການຫັນເປັນຫົວໜ່ວຍວິຊາການຄຸ້ມຕົນເອງ ໃນການບໍລິຫານຄຸ້ມຄອງກອງແບບເອກະ ລາດທາງດ້ານການເງິນ ແລະ ລະບຽບການສະເພາະ; ພັດທະນາ ບົດສະເໜີໂຄງການຂະໜາດນ້ອຍບໍ່ເກີນ 10 ລ້ານໂດລາສະຫະລັດ ເພື່ອຂໍທຶນນຳ ກອງທຶນສີຂຽນດ້ານການປ່ຽນແປງອາກາດ GCF , ກະກຽມເອກະສານທາງດ້ານນິຕິກຳ ເພື່ອສະໜອງໃຫ້ກັບ GCF ໃນການດຳເນີນຂະບວນການ ເອກະສານສັນຍາຮ່ວມມືສອງຝ່າຍ (Accreditation Master Agreement) ໃນການເຂົ້າເປັນອົງກອນແຫ່ງຊາດເພື່ອເຂົ້າເຖິງແຫ່ງທຶນສາກົນ GCF ແລະ ການຄຸ້ມຄອງໂຄງການ ໂດຍມີການປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ, ທ້ອງຖິ່ນ ແລະ ສາກົນ ໃຫ້ມີຄວາມກົມກຽວ ພ້ອມທັງ ຫັນເປັນທັນສະໄໝ, ສ້າງພະນັກງານ ໃຫ້ມີຄວາມຊຳນິຊຳນານ ເພື່ອຍົກປະສິດທິພາບ ແລະ ປະສິດທິຜົນ ໃນການເປັນເສນາທິການ ໃຫ້ແກ່ ກະຊວງກະສິກຳ ແລະ ສິ່ງແວດລ້ອມ.

ເພື່ອໃຫ້ບັນດາຄາດໝາຍສູ້ຊົນ ແລະ ວຽກຈຸດສຸມ ສາມາດບັນລຸຕາມຄາດໝາຍທີ່ກຳນົດໄວ້ ໃນແຜນການ 5 ປີ ຂອງ ກອງທຶນປົກປັກສາສິ່ງແວດລ້ອມ ແລະ ປ່າໄມ້ ຈຶ່ງໄດ້ກຳນົດວຽກງານຫລັກ 5 ດ້ານວຽກງານຄື: 1). ດ້ານການຈັດຕັ້ງ ແລະ ບຸກ

ຄະລາກອນ; 2). ດ້ານການລະດົມທຶນ, ສະສົມທຶນ ແລະ ເກັບລາຍຮັບ; 3). ດ້ານການສະໜອງທຶນ ແລະ ປະຕິບັດລາຍຈ່າຍ; 4). ດ້ານການຕິດຕາມ, ກວດກາ ແລະ ປະເມີນຜົນ ການນຳໃຊ້ທຶນ; 5). ດ້ານການຮ່ວມມື ແລະ ຫັນເປັນຄູ່ຮ່ວມງານສາກົນ.

ແຜນການ 5 ປີ ຂອງ ກສປ ສະບັບນີ້ ໄດ້ຜ່ານຂະບວນການຄົ້ນຄ້ວາ, ປຶກສາຫາລືຮ່ວມກັນ ກັບບັນດາຂະແໜງການກ່ຽວຂ້ອງ ພາຍໃນ ແລະ ພາກສ່ວນກ່ຽວຂ້ອງ ພ້ອມທັງ ສະເໜີຜ່ານການຮັບຮອງຈາກ ກອງປະຊຸມ ສະພາບໍລິຫານສະໄໝສາມັນ ຄັ້ງທີ XIV ໃນວັນທີ 18 ກຸມພາ 2026 ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້.

ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຂໍສະແດງຄວາມຂອບໃຈ ມາຍັງການນຳ ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ສະມາຊິກສະພາບໍລິຫານກອງທຶນ, ຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ທີ່ໄດ້ປະກອບສ່ວນທັງສະຕິປັນຍາ, ເຫື່ອແຮງ ແລະ ໃຫ້ການສະໜັບສະໜຸນຢ່າງຕໍ່ເນື່ອງໃນການເຄື່ອນໄຫວວຽກງານຂອງ ກສປ. ຂໍຂອບໃຈຄູ່ຮ່ວມພັດທະນາຕ່າງໆ ໂດຍສະເພາະ ທະນາຄານໂລກ WB, ອົງການ GIZ, UNEP ແລະ ອື່ນໆ ທີ່ໄດ້ສະໜອງທຶນໃຫ້ແກ່ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ກໍຄື ປະເທດລາວ ເພື່ອນຳໃຊ້ເຂົ້າໃນວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ປະກອບ ສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃຫ້ໄປຕາມທິດສີຂຽວ ແລະ ຍືນຍົງ ແລະ ຂໍຊົມເຊີຍຄວາມພະຍາຍາມຂອງທຸກພາກສ່ວນທີ່ເຂົ້າຮ່ວມໃນການຈັດຕັ້ງປະຕິບັດແຜນການ 5 ປີ ຜ່ານມາ ຂອງ ກສປ ເປັນຢ່າງດີ ແລະ ຫວັງວ່າຈະໄດ້ຮັບການສືບຕໍ່ຮ່ວມມືຈາກທຸກພາກສ່ວນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ວິໃສທັດ, ຍຸດທະສາດ ແລະ ແຜນການ 5 ປີ ຕໍ່ໜ້າ (2026-2030) ຂອງ ກສປ ໄດ້ຮັບຜົນສຳເລັດຕາມຈຸດປະສົງ ແລະ ຄາດໝາຍ.

ນະຄອນຫຼວງວຽງຈັນ, ວັນທີ 04 MAR 2026

ຫົວໜ້າຫ້ອງການກອງທຶນ

ພັດນະຄອນ ຄັນທະມີໄຊ

ສາລະບານ:

ພາກທີ I ບົດສະຫຼຸບ ການເຄື່ອນໄຫວວຽກງານ 5 ປີ (2021-2025) ຂອງ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ 3

I. ສະພາບລວມຂອງກອງທຶນ 3

II. ໂຄງປະກອບການຈັດຕັ້ງປະຈຸບັນຂອງກອງທຶນ 3

III. ດ້ານນິຕິກຳ 4

3.1. ກອງທຶນປົກປັກຮັກສາສິ່ງແວດລ້ອມ: 4

3.2. ກອງທຶນປົກປັກຮັກສາປ່າໄມ້: 5

IV. ດ້ານການເງິນຂອງບ້ອງທຶນສິ່ງແວດລ້ອມ ແລະ ບ້ອງທຶນປົກປັກຮັກປ່າໄມ້ 5

4.1. ການຄຸ້ມຄອງ ລາຍຮັບ ທຶນພາຍໃນ ຂອງ ບ້ອງທຶນສິ່ງແວດລ້ອມ 5

4.2. ການຄຸ້ມຄອງ ການເບີກຈ່າຍງົບປະມານ ທຶນພາຍໃນ ຂອງ ບ້ອງທຶນສິ່ງແວດລ້ອມ 6

4.3. ກົນໄກການສະໜອງທຶນບ້ອງປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ 7

4.4. ກົນໄກການເງິນບ້ອງທຶນປ່າໄມ້ 8

4.5. ນະໂຍບາຍສະໜອງທຶນບ້ອງປ່າໄມ້ 9

V. ຜົນສຳເລັດການປະຕິບັດລາຍຮັບ-ລາຍຈ່າຍ ດ້ານສິ່ງແວດລ້ອມ 9

5.1. ການປະຕິບັດລາຍຮັບ 9

5.2. ການປະຕິບັດລາຍຈ່າຍ: 10

VI. ຜົນສຳເລັດການປະຕິບັດລາຍຮັບ-ລາຍຈ່າຍ ຂອງປ່າໄມ້ 11

6.1. ການປະຕິບັດລາຍຮັບ: 11

6.2. ການປະຕິບັດລາຍຈ່າຍ: 12

VII. ຜົນສຳເລັດໂດຍລວມຂອງບ້ອງງົບປະມານປ່າໄມ້ 12

VIII. ລາຍງານຄວາມຄືບໜ້າການຮ່ວມມືກັບສາກົນ 13

8.1. ລາຍງານຄວາມຄືບໜ້າວຽກງານຮ່ວມມືສາກົນ ແລະ ການກະກຽມເຂົ້າເປັນສະມາຊິກຂອງ GCF 13

8.2. ລາຍງານຄວາມຄືບໜ້າການບໍລິການດ້ານການເງິນໃນການຄຸ້ມຄອງທຶນສາກົນ 15

ພາກທີ II ທິດທາງແຜນການ 5 ປີ (2026-2030) ໃນການຈັດຕັ້ງປະຕິບັດວຽກງານ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ 16

I. ທິດທາງລວມ 16

II. ໜ້າວຽກຈຸດສຸມ 16

2.1. ດ້ານການຈັດຕັ້ງ ແລະ ບຸກຄະລາກອນ 16

2.2. ດ້ານການລະດົມທຶນ, ສະສົມທຶນ ແລະ ເກັບລາຍຮັບ 17

2.3. ດ້ານການສະໜອງທຶນ ແລະ ການປະຕິບັດລາຍຈ່າຍ 18
2.4. ດ້ານການກວດກາ, ຕິດຕາມ ແລະ ປະເມີນຜົນ ການນຳໃຊ້ທຶນ 19
2.5. ດ້ານການຮ່ວມມື ແລະ ການຫັນເປັນຄູ່ຮ່ວມງານ 20
2.6. ຄາດຄະເນ ແຫຼ່ງທຶນ ນຳໃຊ້ເຂົ້າໃນຈັດຕັ້ງປະຕິບັດ 20
III. ມາດຕະການຈັດຕັ້ງປະຕິບັດ 20

ພາກທີ I
ບົດສະຫຼຸບ ການເຄື່ອນໄຫວວຽກງານ 5 ປີ (2021-2025) ຂອງ ຫ້ອງການກອງທຶນປົກປັກຮັກສາ ສິ່ງແວດລ້ອມ ແລະ ປ່າໄມ້

- ອີງຕາມ ດຳລັດນາຍົກລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ສະບັບເລກທີ 631/ນຍ, ລົງວັນທີ 17 ຕຸລາ 2025;
- ອີງຕາມ ຂໍ້ຕົກລົງວ່າ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ສະບັບເລກທີ 1259/ກສ, ລົງວັນທີ 02 ກັນຍາ 2025.

I. ສະພາບລວມຂອງກອງທຶນ

ໃນກາງປີ 2025 ລັດຖະບານໄດ້ມີການປັບປຸງກົງຈັກການຈັດຕັ້ງ ໂດຍການໂອນ ກະຊວງຊັບພະຍາ ກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງກະສິກຳ ແລະ ປ່າໄມ້ ເຂົ້າກັນໂດຍປ່ຽນຊື່ເປັນ ກະຊວງກະສິກຳ ແລະ ສິ່ງແວດລ້ອມ. ໃນນີ້, ກອງທຶນປົກປັກຮັກສາສິ່ງແວດລ້ອມ ກໍ່ໄດ້ຖືກຊັບຊ້ອນໂອນເຂົ້າກັບ ຫ້ອງການກອງທຶນປົກປັກຮັກສາປ່າໄມ້ ປ່ຽນຊື່ມາເປັນ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ເຊິ່ງເປັນຫົວໜ່ວຍງົບປະມານຂັ້ນ 02 ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ. ໃນໄລຍະຜ່ານ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໄດ້ເອົາໃຈໃສ່ຢ່າງຕັ້ງໜ້າ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການເງິນ, ສະໜອງທຶນ ແລະ ໃຫ້ການບໍລິການ ໃນການຄຸ້ມຄອງໂຄງການ ຊຶ່ງສາມາດປະຕິບັດລາຍຮັບທຶນພາຍໃນສະເລ່ຍ 17.8 ລ້ານໂດລາສະຫະລັດ, ຄຸ້ມຄອງ ງົບປະມານໂຄງການສາກົນຈຳນວນ 8 ໂຄງການ (LENS2, LLL, IGFLL,SUIGFLM, UNDP, RPSP, Ebs-UNEP, PWMP) ມູນຄ່າ 30 ລ້ານເອີໂຣ ແລະ 61 ລ້ານໂດລາສະຫະລັດ. ໄດ້ເຊັນສັນຍາສະໜອງທຶນພາຍໃນໃຫ້ໂຄງການຍ່ອຍຈຳນວນ 54 ໂຄງການ ລວມມູນຄ່າ 34 ຕື້ກວ່າກີບ ເຂົ້າໃນວຽກງານ 6 ບຸລິມະສິດ. ພ້ອມນັ້ນ ກໍໄດ້ຫັນເປັນຄູ່ຮ່ວມງານກັບສາກົນ ໂດຍສະໝັກເຂົ້າເປັນອົງກອນແຫ່ງຊາດທີ່ສາມາດເຂົ້າເຖິງແຫຼ່ງທຶນສາກົນໂດຍກົງ ຂອງກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ (Green Climate Fund "GCF"). ພ້ອມກັນນັ້ນ, ຍັງໄດ້ປະສານສົມທົບກັບ ທຸກພາກສ່ວນທີ່ກ່ຽວຂ້ອງ ພາກລັດ, ຜູ້ພັດທະນາໂຄງການ ແລະ ອົງການຈັດຕັ້ງສາກົນ. ເພື່ອຈັດຕັ້ງປະຕິບັດດຳລັດ ວ່າດ້ວຍກອງທຶນປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 94/ລບ, ລົງວັນທີ 8 ມີນາ 2017 ແລະ ດຳລັດວ່າດ້ວນ ກອງທຶນປົກປັກຮັກສາປ່າໄມ້ ສະບັບເລກທີ 567/ລບ, ລົງວັນທີ 16 ກັນຍາ 2021. ພາຍໃຕ້ການນຳພາຊີ້ນຳ ຂອງສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ເພື່ອລະດົມຂຶ້ນຂວາຍທຶນ, ຈາກພາຍໃນ ແລະ ຕ່າງປະເທດ ແນ່ໃສ່ສະສົມທຶນ ເພື່ອຕອບສະໜອງໃຫ້ແກ່ວຽກງານການຄຸ້ມຄອງຊັບພະຍາກອນ ທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ແບບຍືນຍົງ ປະກອບສ່ວນໃຫ້ແກ່ການຈັດແຜນພັດທະນາເສດ ຖະກິດສັງຄົມແຫ່ງຊາດ.

II. ໂຄງປະກອບການຈັດຕັ້ງປະຈຸບັນຂອງກອງທຶນ

ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ປະກອບມີ:

- ສະພາບໍລິຫານ ກອງທຶນ ຊຶ່ງເປັນປະທານສະພາບໍລິຫານໂດຍ ທ່ານ ລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕາມເອກະສານ "ດຳລັດ ວ່າດ້ວຍການແຕ່ງຕັ້ງປະມານສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ສະບັບເລກທີ 631/ນຍ, ລົງວັນທີ 17/10/2025.
- ຫ້ອງການກອງທຶນ ປະກອບມີ ຫົວໜ້າ ແລະ ຮອງຫົວໜ້າຫ້ອງການກອງທຶນ ລວມ 4 ທ່ານ. ໃນນີ້ປະກອບມີ 4 ຂະແໜງການ ຄື 1). ຂະແໜງບໍລິຫານ-ຈັດຊື້ຈັດຈ້າງ, 2). ຂະແໜງແຜນການ-ຮ່ວມມື ແລະ ລະດົມທຶນ, 3). ຂະແໜງການເງິນ ແລະ 4) ຂະແໜງຄຸ້ມຄອງໂຄງການ;

- ຫ້ອງການ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໄດ້ຮ່າງແຜນກຳນົດຕຳແໜ່ງການເບື້ອງຕົ້ນ ຊຶ່ງປະກອບມີຕຳແໜ່ງງານ ທັງໝົດ 63 ຕຳແໜ່ງ. ສຳລັບການປະຕິບັດວຽກງານປະຈຸບັນ ມີພະນັກງານທັງໝົດ ລັບ ທຶນພາຍໃນ 33 ທ່ານ ໃນນັ້ນ ເປັນພະນັກງານ-ລັດຖະກອນ 16 ທ່ານ ດັ່ງລາຍລະອຽດດັ່ງລຸ່ມນີ້:
    - ພະນັກງານບ້ວງທຶນພາຍໃນ: ລວມທັງໝົດ 35 ທ່ານ ຍິງ 20 ທ່ານ, ໃນນັ້ນ ປະກອບມີ ຄະນະຫ້ອງການ 04 ທ່ານ, ຍິງ 1 ທ່ານ; ຄະນະຂະແໜງ 10 ທ່ານ, ຍິງ 07 ທ່ານ; ພະນັກງານ ວິຊາການ 17 ທ່ານ, ຍິງ 11 ທ່ານ ແລະ ພະນັກງານ ຂັບລົດ 3 ທ່ານ ແລະ ອານະໄມ 1 ທ່ານ (ຍິງ);
    - ພະນັກງານໂຄງການທຶນສາກົນ (WB,GIZ-GCF, UNEP-GCF) : ລວມທັງໝົດ 17 ທ່ານ ຍິງ 8 ທ່ານ, ໃນນັ້ນ ປະກອບມີ ຕຳແໜ່ງ ການເງິນ ອາວຸໂສ ຈຳນວນ 01 ທ່ານ; ຕຳ ແໜ່ງ ບັນຊີ ອາວຸໂສ ຈຳນວນ 01 ທ່ານ; ຕຳ ແໜ່ງ ວິຊາການ ຈັດຊື້-ຈັດຈ້າງ 02 ທ່ານ; ຕຳແໜ່ງ ວິຊາການ ການເງິນ ຈຳນວນ 02 ທ່ານ, ຕຳແໜ່ງ ວິຊາການ ບັນຊີ 01 ທ່ານ, ຕຳແໜ່ງ ຜູ້ປະສານງານ ຈຳນວນ 02 ທ່ານ ແລະ ຕຳແໜ່ງ ຜູ້ຊ່ວຍວຽກບັນຊີ ທັງໝົດ 08 ທ່ານ.

III. ດ້ານນິຕິກຳ

ຫ້ອງການກອງທຶນປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແມ່ນກອງທຶນທີ່ໂຮມ ສອງກອງທຶນເຂົ້າກັນ ຄື: ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ກອງທຶນປົກປັກຮັສາປ່າໄມ້ ຂຽນຫຍໍ້ເປັນພາສາລາວ ວ່າ "ກສປ" ເປັນພາສາອັງກິດວ່າ “Environment and Forest Protection Fund - EFF” ເຊິ່ງເປັນເປັນຫົວໜ່ວຍງົບປະມານ ວິຊາການ ຂຶ້ນສອງ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ, ແມ່ນການຈັດຕັ້ງໜຶ່ງທີ່ເປັນເຈົ້າຕົນເອງມີຄວາມ ເປັນເອກະລາດ ທາງດ້ານການເງິນ, ການບໍລິຫານຄຸ້ມຄອງ ແລະ ເຄື່ອນໄຫວວຽກງານ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ພາຍໃຕ້ລະບຽບກົດໝາຍຂອງ ສປປ ລາວ ແລະ ມີພາລະບົດ ບາດເປັນເສນາທິການໃຫ້ແກ່ ສະພາບໍລິຫານຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃນການລະດົມທຶນຈາກພາຍໃນ ແລະ ຕ່າງປະເທດ ດ້ວຍຮູບການ ຕ່າງໆ ທີ່ມີຄວາມສອດຄອງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ແນໃສ່ສະສົມທຶນ ເພື່ອຕອບສະໜອງເຂົ້າໃນ ວຽກງານການຄຸ້ມຄອງຊັບພະຍາກອນທຳມະ ຊາດ, ປ່າໄມ້ ແລະ ການປົກປັກຮັກສາສິ່ງແວດລ້ອມ ໃຫ້ມີປະສິດທິຜົນສູງ ແລະ ຍືນຍົງ. ນອກຈາກນັ້ນ, ກອງທຶນ ແມ່ນຢູ່ໃນຊ່ວງກະກຽມເປັນອົງກອນແຫ່ງຊາດ ທີ່ສາມາດເຂົ້າເຖິງແຫຼ່ງທຶນ ສາກົນໂດຍກົງ (Accreditation Entities) ຂອງກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ (Green Climate Fund “GCF”). ສຳລັບການສ້າງຕັ້ງກອງທຶນດັ່ງກ່າວ ແມ່ນມີນິຕິກຳຮອງຮັບດັ່ງລາຍລະອຽດລຸ່ມນີ້:

3.1. ກອງທຶນປົກປັກຮັກສາສິ່ງແວດລ້ອມ:

- ຖືກສ້າງຕັ້ງຂຶ້ນ ໃນປີ 2005 ຕາມດຳລັດສະບັບເລກທີ 146/ນຍ, ລົງວັນທີ 6 ມິຖຸນາ 2005 ແລະ ໄດ້ຖືກ ປັບປຸງໃນປີ 2017 ຕາມດຳລັດ ສະບັບເລກທີ 94/ລບ, ລົງວັນທີ 8 ມີນາ 2017;
- ຂໍ້ຕົກລົງວ່າດ້ວຍລະບຽບການຄຸ້ມຄອງກອງທຶນປົກປັກຮັກສາສິ່ງແວດລ້ອມ ເລກທີ 02/ກປສ.ສພ, ລົງວັນທີ 09 ກຸມພາ 2021;
- ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ໄດ້ປະຕິບັດໜ້າທີ່ ເປັນຫົວໜ່ວຍງົບປະມານຂັ້ນ II ທີ່ຂຶ້ນກັບ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມຂໍ້ຕົກລົງຂອງກະຊວງການເງິນ ວ່າດ້ວຍການ ອະນຸມັດໃຫ້ກອງປົກປັກຮັກສາສິ່ງແວດລ້ອມ ເປັນຫົວໜ່ວຍງົບປະມານຂັ້ນ II ສະບັບເລກທີ 1837/ກງ, ລົງ ວັນທີ 5 ເມສາ 2021;
- ດຳລັດວ່າດ້ວຍການແຕ່ງຕັ້ງບຸກຄະລາກອນຂອງສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ ສະບັບ ເລກທີ 215/ນຍ, ລົງວັນທີ 12 ມິຖຸນາ 2023;
- ແລະ ມີບັນດາຄູ່ມື ໃນການຄຸ້ມຄອງປະຕິບັດໂຄງການ ຈຳນວນ 7 ຄູ່ມື ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

3.2. ກອງທຶນປົກປັກຮັກສາປ່າໄມ້:

- ຖືກສ້າງຕັ້ງຂຶ້ນໃນປີ 2005 ຕາມດຳລັດສະບັບເລກທີ 38/ນຍ, ລົງວັນທີ 21 ກຸມາ 2005 ແລະ ໄດ້ຖືກປັບປຸງໃນປີ 2021 ຕາມດຳລັດສະບັບເລກທີ 567/ລບ, ລົງວັນທີ 16 ກັນຍາ 2021;
- ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງທຶນປົກປັກຮັກສາປ່າໄມ້ ສະບັບເລກທີ 2926/ກປ, ລົງວັນທີ 16 ມິຖຸນາ 2023;
- ດຳລັດວ່າດ້ວຍການແຕ່ງຕັ້ງບຸກຄະລາກອນຂອງສະພາບໍລິຫານ ກອງທຶນປົກປັກຮັກສາປ່າໄມ້ ສະບັບເລກທີ 13/ນຍ, ລົງວັນທີ 04 ມີນາ 2022;
- ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງພະນັກງານ ປະກອບເຂົ້າເປັນກອງເລຂາສະພາບໍລິຫານ ກອງທຶນປົກປັກຮັກສາປ່າໄມ້ ສະບັບເລກທີ 1782/ກປ, ລົງວັນທີ 12 ພຶດສະພາ 2022.

IV. ດ້ານການເງິນຂອງບ້ວງທຶນສິ່ງແວດລ້ອມ ແລະ ບ້ວງທຶນປົກປັກຮັກປ່າໄມ້

4.1. ການຄຸ້ມຄອງ ລາຍຮັບ ທຶນພາຍໃນ ຂອງ ບ້ວງທຶນສິ່ງແວດລ້ອມ

ກົນໄກການຄຸ້ມຄອງການເງິນ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃນປະຈຸບັນ ແມ່ນ ຫົວໜ່ວຍງົບປະມານຂັ້ນ 2 ຂອງ ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ ໂດຍອີງຕາມ ຂໍ້ຕົກລົງ ວ່າດ້ວຍ ແບ່ງຂັ້ນຄຸ້ມຄອງ ຫົວໜ່ວຍງົບປະມານຂັ້ນ 1 ແລະ ຂັ້ນ 2 ທີ່ຂຶ້ນກັບ ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ, ສະບັບເລກທີ 1767/ກສ, ລົງວັນທີ 17 ຕຸລາ 2025 ເຊິ່ງຄວາມຮັບຜິດຊອບ ຂອງຫົວໜ່ວຍງົບປະມານ ຂັ້ນ 2 ສາມາດຈັດຕັ້ງປະຕິບັດດັ່ງລຸ່ມນີ້:

1) ຄຸ້ມຄອງ, ຈັດຕັ້ງປະຕິບັດ ແຜນລາຍຮັບ-ລາຍຈ່າຍງົບປະມານ ຂອງຕົນຕາມແຜນແບ່ງປະຈຳປີ ໃຫ້ຖືກຕ້ອງ, ຄົບຖ້ວນ, ທັນເວລາ, ປະຕິບັດລາຍຈ່າຍງົບປະມານ ໃຫ້ໂປ່ງໃສ, ປະຢັດມັດທະຍັດ, ມີປະສິດທິຜົນ, ເອກະພາບໃນຂອບເຂດທົ່ວກະຊວງ ແລະ ທ້ອງຖິ່ນ (ເວົ້າສະເພາະແລ້ວ ການປະຕິບັດລາຍຈ່າຍ ຕ້ອງປະຕິບັດ ຜ່ານລະບົບກະຊວງການເງິນ ແລະ ມີເພດານແບ່ງບັນ ເພດານລາຍຈ່າຍ ປະຈຳປີ ຈາກ ຫົວໜ່ວຍງົບປະມານ 1 ຂອງ ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ ກໍ່ຄື ຫ້ອງການກະຊວງ);
2) ໄລ່ລ່ຽງລາຍຈ່າຍໃຫ້ຖືກຕ້ອງຕາມສາລະບານງົບປະມານກຳນົດໄວ້, ນຳໃຊ້ໃຫ້ຖືກຕ້ອງຕາມເປົ້າໝາຍ, ມີປະສິດທິຜົນ ແລະ ຮັບປະກັນການຮົ່ວໄຫຼຂອງງົບປະມານ ທີ່ໄດ້ຮັບແຜນຈັດແບ່ງ;
3) ປະກອບເອກະສານ ຂໍອະນຸມັດງົບປະມານ ແລະ ສະຫຼຸບລາຍຈ່າຍຂອງຕົນ ໃຫ້ກົງຕາມແຜນ ງວດ 03 ເດືອນ, 06 ເດືອນ, 09 ເດືອນ ແລະ ແຜນປະຈຳປີ ກຳນົດໄວ້ (ເວົ້າສະເພາະແລ້ວ ຜູ້ອະນຸມັດງົບປະມານ ແມ່ນຕ້ອງສົ່ງເອກະສານ ຂໍຖອນງົບປະມານ ໄປຫາ ຫ້ອງການ ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ອະນຸມັດ ທຸກໆກິດຈະກຳ ຂໍຖອນງົບປະມານ ຕາມແຜນປະຈຳປີ ກຳນົດໄວ້);
4) ປະສານສົມທົບຫົວໜ່ວຍງົບປະມານ ຂັ້ນ 01 ຢ່າງເປັນປົກກະຕິ.


ເວົ້າລວມ ເວົ້າສະເພາະ ການຄຸ້ມຄອງການເງິນ ຂອງ ກອງທຶນ ໂດຍສະເພາະ ທຶນພາຍໃນ ແມ່ນປະຕິບັດ ຜ່ານລະບົບ ການຄຸ້ມຄອງງົບປະມານແຫ່ງລັດ ຂອງ ກະຊວງ ການເງິນ ໂດຍອີງໃສ່ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ສະບັບປັບປຸງ), ເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015; ກົດໝາຍວ່າດ້ວຍ ການບັນຊີ (ສະບັບປັບປຸງ), ເລກທີ 46/ສພຊ, ລົງວັນທີ 20 ພະຈິກ 2023 ເພື່ອເປັນບ່ອນອີງໃສ່ການຄຸ້ມຄອງງົບປະມານ, ຄຸ້ມຄອງການເງິນ ແລະ ການບັນຊີ ໃຫ້ສອດຄອງກັບ ລະບຽບການ ຂອງ ສປປລາວ. ພ້ອມດຽວກັນນັ້ນ ການຄຸ້ມຄອງການເງິນ ຂອງ ກອງທຶນ ແມ່ນຍັງໄດ້ອີງໃສ່ ຄຳແນະນຳ ກ່ຽວກັບ ການຄຸ້ມຄອງລາຍຮັບ-ລາຍຈ່າຍ ຄ່າບໍລິການທາງດ້ານວິຊາການ ແລະ ກອງທຶນ ຂອງລັດ, ສະບັບເລກທີ 0016/ກງ, ລົງວັນທີ 03 ມັງກອນ 2019 ເພື່ອເປັນບ່ອນອີງ ໃນການຄຸ້ມຄອງງົບປະມານ ແລະ ຄຸ້ມຄອງການເງິນ ຂອງ ກອງທຶນ. ນອກຈາກນັ້ນແລ້ວ ໄລຍະຜ່ານມາ ກໍ່ຄືປະຈຸບັນ ຫ້ອງການກອງທຶນ ຍັງໄດ້ມີຄູ່ມື ຄຸ້ມຄອງການເງິນ ຂອງ ກອງທຶນ ໂດຍການຮັບຮອງຈາກ ສະພາບໍລິຫານກອງທຶນ ຕາມຂໍ້ຕົກລົງ ເລກທີ 04/ກສປ, ສພ, ລົງວັນທີ 18

ມັງກອນ 2023 ເຊິ່ງເປັນສະບັບປຸງ ສະບັບປີ 2016 ເພື່ອເປັນບ່ອນອີງ ໃນການຕິດຕາມ ແລະ ຄຸ້ມຄອງ ການຈັດຕັ້ງ ປະຕິບັດ ວຽກງານ ການເງິນ ແລະ ບັນດາໂຄງການທີ່ໄດ້ຮັບທຶນ ຂອງ ກອງທຶນ.

4.2. ການຄຸ້ມຄອງ ການເບີກຈ່າຍງົບປະມານ ທຶນພາຍໃນ ຂອງ ບ້ວງທຶນສິ່ງແວດລ້ອມ

ການຈັດຕັ້ງປະຕິບັດ ການຄຸ້ມຄອງ ການປະຕິບັດລາຍຈ່າຍງົບປະມານ ຂອງ ກອງທຶນປົກຮັກສາສິ່ງແວດລ້ອມ ແມ່ນໄດ້ອີງໃສ່ ຄຳແນະນຳ ກ່ຽວກັບ ການປະກອບເອກະສານ ແລະ ກວດກາ ເອກະສານລາຍຈ່າຍ ງົບປະມານແຫ່ງລັດ ແລະ ທຶນຊ່ວຍເຫຼືອທາງການ ເພື່ອການພັດທະນາ ຢູ່ ຄັງເງິນແຫ່ງຊາດ, ສະບັບເລກທີ 0866/ກງ, ລົງວັນທີ 22 ມີນາ 2019 ແລະ ອີງໃສ່ ຂໍ້ຕົກລົງ ວ່າດ້ວຍ ກຳນົດໝາຍການໃຊ້ຂ່າຍງົບປະມານຂອງລັດ, ການປະຢັດ ແລະ ຄ້ານການຟຸມເຟືອຍ, ສະບັບເລກທີ 0200/ກງ, ລົງວັນທີ 25 ມັງກອນ 2023 ແລະ ສະບັບປັບປຸງເພີ່ມຕື່ມ ສະບັບເລກທີ 0012/ກງ, ລົງວັນທີ 03 ມັງກອນ 2025 ເພື່ອເປັນບ່ອນອີງໃນການຂໍຖອນງົບປະມານ ຕາມລະບຽບການ ຂອງ ກະຊວງ ການເງິນ;

 # ກົນໄກ ການອະນຸມັດເອກະສານການເງິນ ຂອງ ຫ້ອງການກອງ



❖ ການຄຸ້ມຄອງ ວຽກງານຈັດຊື້-ຈັດຈ້າງ

ຫ້ອງການ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຈັດຕັ້ງປະຕິບັດ ວຽກງານ ຈັດຊື້-ຈັດຈ້າງ ໂດຍອີງ ຕາມ ກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເກລທີ 0477/ກ, ລົງວັນທີ 13 ກຸມພາ 2019 ເພື່ອເປັນບ່ອນອີງ ຈັດຕັ້ງປະຕິບັດວຽກງານດັ່ງກ່າວ; ນອກຈາກນັ້ນແລ້ວ, ຫ້ອງການ ກອງທຶນ ຍັງມີ ຄູ່ມືແນະນຳ ການຈັດຊື້-ຈັດຈ້າງ ຂອງ ກອງທຶນ ດຍມີການຮັບຮອງຈາກ ສະພາບໍລິຫານກອງ ທຶນ ຕາມຂໍ້ຕົກລົງ ສະບັບເລກທີ 02/ກປສ.ສພ, ລົງວັນທີ 25 ກຸມພາ 2022 ເພື່ອເປັນບ່ອນອີງ ໃນການຈັດຕັ້ງປະຕິບັດ ວຽກງານ ການຈັດຊື້-ຈັດຈ້າງ ໃຫ້ຖືກຕ້ອງຕາມລະບຽບຂັ້ນຕອນ ແລະ ຄູ່ມືດັ່ງກ່າວ ກໍ່ເປັນການປັບປຸງ ຄູ່ມື ໃນປີ 2019;

ປະຈຸບັນ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຍັງໄດ້ມີການແຕ່ງຕັ້ງ ຄະນະຮັບຜິດຊອບ ການຈັດຊື້-ຈັດຈ້າງ ຂອງ ຫ້ອງການກອງທຶນ ໂດຍອີງຕາມ ຂໍ້ຕົກລົງ ຂອງ ທ່ານ ລັດຖະມົນຕີ ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ, ປະທານສະພາບໍລິການກອງທຶນ, ສະບັບເລກທີ 236/ກສ, ລົງວັນທີ 24 ພະຈິກ 2025 ໂດຍມີ ທ່ານ ກິ ແກ້ວ ສີງນາວົງ, ຮອງລັດຖະມົນຕີ ກະຊວງ ເປັນປະທານ ໂດຍຄະນະດັ່ງກ່າວ ຈະໄດ້ຮັບຜິດຊອບ ມູນຄ່າຈັດຊື້-ຈັດຈ້າງ ຫຼາຍກວ່າ 500 ລ້ານກີບ ຂຶ້ນໄປ;

ພ້ອມດຽວກັນນັ້ນ, ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຍັງມີການແຕ່ງຕັ້ງ ຄະນະ ຮັບຜິດຊອບ ການຈັດຊື້-ຈັດຈ້າງ ພາຍໃນເພື່ອຮັບຜິດຊອບ ວຽກງານ ຈັດຊື້-ຈັດຈ້າງ ທີ່ມີມູນຄ່າ ບໍ່ເກີນ 500 ລ້ານກີບ ໂດຍມີ ຮອງຫົວໜ້າຫ້ອງການກອງທຶນ ເປັນປະທານ ແລະ ຕາງໜ້າ ພາກສ່ວນ ກະຊວງ ການເງິນ ເຂົ້າຮ່ວມເປັນຄະນະ ປະມູນຈັດຊື້-ຈັດຈ້າງ ດັ່ງກ່າວ.

4.3. ກົນໄກການສະໜອງທຶນບ້ວງປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້

1. ບ້ວງປະກອບສ່ວນພັນທະປົກປັກຮັກສາສິ່ງແວດລ້ອມ

ໃນໄລຍະຜ່ານມາ ຫ້ອງການກອງທຶນ ສາມາດລະດົມທຶນທັງພາຍໃນ ແລະ ສາກົນ ເພື່ອຕອບສະໜອງໃຫ້ແກ່ ພາກສ່ວນຕ່າງໆໃນການຈັດຕັ້ງປະຕິບັດໂຄງການທີ່ຕິດພັນກັບການການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກ ປັກຮັກສາສິ່ງແວດລ້ອມ ສຳລັບທຶນພາຍໃນແມ່ນ ໄດ້ສະໜອງທຶນໃຫ້ໂຄງການຂະໜາດນ້ອຍ ແລະ ກາງ ຜ່ານ 6 ຮ່ວງທຶນ ຄື: ຮ່ວງທຶນດ້ານນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ, ຮ່ວງທຶນດ້ານອະນຸລັກຊີວະນາໆພັນ ແລະ ພັດທະນາຊຸມຊົນ, ຮ່ວງທຶນດ້ານສິ່ງແວດລ້ອມ, ຮ່ວງທຶນດ້ານການຄຸ້ມຄອງຊັບພະຍາກອນນ້ຳແບບຍືນຍົງ, ຮ່ວງທຶນດ້ານ ການຄຸ້ມຄອງທີ່ດິນແບບຍືນຍົງ ແລະ ຮ່ວງທຶນດ້ານການປັບຕົວກັບການປ່ຽນແປງດິນຟ້າອາກາດ ໂດຍ ສອດຄ່ອງກັບ ແຜນບຸລິມະສິດແຫ່ງຊາດ ໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ.

- ❖ ຫ້ອງການກອງທຶນ ໄດ້ຈັດແບ່ງຂະໜາດໂຄງການ ໃນການສະໜອງທຶນພາຍໃນ ດັ່ງນີ້:
- ▪ ໂຄງການຂະໜາດນ້ອຍ: ວົງເງິນການສະໜອງທຶນບໍ່ເກີນ 300,000,000 ກີບຕໍ່ໂຄງການ, ໄລຍະຈັດຕັ້ງ ປະຕິບັດໂຄງການບໍ່ເກີນ 2 ປີ ນັບແຕ່ມື້ເຊັນສັນຍາເປັນຕົ້ນໄປ ແລະ ສັນຍາສາມາດຕໍ່ໄດ້ບໍ່ເກີນ 1 ຄັ້ງ (ຄັ້ງ ລະ 12 ເດືອນ);
- ▪ ໂຄງການຂະໜາດກາງ: ວົງເງິນການສະໜອງທຶນບໍ່ເກີນ 800,000,000 ກີບຕໍ່ໂຄງການ, ໄລຍະຈັດຕັ້ງ ປະຕິບັດໂຄງການບໍ່ເກີນ 4 ປີ ນັບແຕ່ມື້ເຊັນສັນຍາເປັນຕົ້ນໄປ ແລະ ສັນຍາສາມາດຕໍ່ໄດ້ບໍ່ເກີນ 2 ຄັ້ງ (ຄັ້ງ ລະ 12 ເດືອນ);
- ▪ ການຕໍ່ອາຍຸໂຄງການທັງສອງຂະໜາດໂຄງການ ຈະສາມາດດຳເນີນໄດ້ຖ້າໂຄງການດັ່ງກ່າວມີ ການເຄື່ອນ ໄຫວເປັນປົກກະຕິ, ບໍ່ມີບັນຫາຄ້າງສະສາງ ແລະ ຈັດຕັ້ງປະຕິບັດການເບີກຈ່າຍເກີນ 50% ຂອງ ງົບປະມານ ໂຄງການທັງໝົດ.

4.3.1. ກົນໄກ ການສະໜອງທຶນບ້ວງຕິດຕາມກວດກາວິຊາການດ້ານສິ່ງແວດລ້ອມ ແລະ ຄຸ້ມຄອງຮັບ ຮັບນ້ຳ.

ບ້ວງທຶນຕິດຕາມກວດກາ ວິຊາການດ້ານສິ່ງແວດລ້ອມ ແລະ ການຄຸ້ມຄອງອ່າງຮັບນ້ຳ ແມ່ນ ແຫຼ່ງລາຍຮັບ ທີ່ໄດ້ມາ ຈາກການປະກອບພັນທະທາງດ້ານສິ່ງແວດລ້ອມຂອງບັນດາໂຄງການລົງທຶນ ຫຼື ກິດຈະການຕ່າງໆ ຕາມທີ່ ໄດ້ ກຳນົດໄວ້ໃນແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ໂດຍສອດຄ່ອງຕາມດຳລັດວ່າດ້ວຍການປະ ເມີນຜົນກະທົບຕໍ່ສິ່ງແວດລ້ອມ ທີ່ໄດ້ໂອນເງິນເຂົ້າໃນບັນຊີເງິນຝາກຂອງຫ້ອງການກອງທຶນປົກປັກຮັກສາສິ່ງ ແວດ ລ້ອມ ທີ່ເປີດຢູ່ຄັງເງິນແຫ່ງຊາດ. ສ່ວນລາຍຮັບງົບປະມານແຜນການຄຸ້ມຄອງອ່າງຮັບນ້ຳ ແມ່ນ ແຫຼ່ງລາຍຮັບທີ່ໄດ້ມາ ຈາກການປະກອບ ພັນທະຂອງບັນດາໂຄງການລົງທຶນ ຫຼື ກິດຈະການຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນແຜນການຄຸ້ມ ຄອງອ່າງຮັບນ້ຳ ໂດຍສອດຄ່ອງຕາມກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ເພື່ອນຳໃຊ້ເຂົ້າໃນວຽກງານການ ຄຸ້ມຄອງ ຊັບພະຍາກອນນ້ຳ ທີ່ໄດ້ໂອນເງິນເຂົ້າບັນຊີເງິນຝາກຂອງຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ທີ່ ເປີດ ຢູ່ຄັງເງິນແຫ່ງຊາດ.

- ❖ ໃນການຂໍນຳໃຊ້ງົບປະມານ ຫ້ອງການກອງທຶນ ມີຄວາມຮັບຜິດຊອບດັ່ງນີ້:
- ▪ ສັງລວມແຜນຄາດຄະເນລາຍຈ່າຍປະຈຳປີ, ກວດຜ່ານແຜນຄິດໄລ່ງົບປະມານ ແລະ ສະໜອງງົບປະມານ ຕາມລະບຽບການເງິນ. ສ່ວນການສັງລວມແຜນແມ່ນ ຈາກກົມກອງກ່ຽວຂ້ອງ ເປັນຕົ້ນ ກົມກວດກາ ຊສ, ກົມສິ່ງແວດລ້ອມ, ກົມຊັບພະຍາກອນນ້ຳ ແລະ ພາກສ່ວນກ່ຽວຂ້ອງ ພາຍໃນກະຊວງກະສິກຳ ແລະ ສິ່ງແວດລ້ອມ;

4.3.2. ນະໂຍບາຍສະໜອງທຶນດ້ານສິ່ງແວດລ້ອມ.

ການສະໜອງງົບປະມານ ທາງ ຫ້ອງການກອງທຶນໄດ້ຈັດສັນງົບປະມານ ໂດຍການສະເໜີເປັນຮູບແບບບົດສະເໜີໂຄງການ ອີງຕາມລະບຽບຄຳແນະນຳວ່າດ້ວຍການສະໜອງທຶນພາຍໃນຂອງ ກປສ ປີ 2022-2025 ອະນຸມັດໂດຍປະມານສະພາບໍລິຫານກອງທຶນ ຜ່ານ 6 ຮ່ວງທຶນຕາມສັດສ່ວນ ຄື: ຮ່ວງທຶນດ້ານນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ (30%), ຮ່ວງທຶນດ້ານອະນຸລັກຊີວະນາໆພັນ ແລະ ພັດທະນາຊຸມຊົນ (15%), ຮ່ວງທຶນດ້ານສິ່ງແວດລ້ອມ ແລະ ຄວບຄຸມມົນລະພິດ (20%), ຮ່ວງທຶນດ້ານການຄຸ້ມຄອງຊັບພະຍາກອນນ້ຳແບບຍືນຍົງ (15%), ຮ່ວງທຶນດ້ານການຄຸ້ມຄອງທີ່ດິນແບບຍືນຍົງ (10%) ແລະ ຮ່ວງທຶນດ້ານການປັບຕົວກັບການປ່ຽນແປງດິນຟ້າອາກາດ (10%) ໂດຍ ສອດຄ່ອງກັບແຜນບຸລິມະສິດແຫ່ງຊາດ ໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ.

- ໃນໄລຍະ 5 ປີ ຜ່ານມາ ຫ້ອງການກອງທຶນ ຄາດຄະເນແຜນສະໜອງທຶນໃຫ້ກັບໂຄງການຍ່ອຍ ຕາມ 6 ຮ່ວງທຶນ ປະມານ 56 ຕື້ກີບ. ຜ່ານການຈັດຕັ້ງປະຕິບັດ ເຫັນວ່າສາມາດອະນຸມັດສະໜອງທຶນ ໄດ້ທັງໝົດ 54 ໂຄງການ ລວມມູນຄ່າທັງໝົດ 34 ຕື້ກວ່າກີບ ເທົ່າກັບ 61% ທຽບໃສ່ແຜນ, ສາມາດແຍກເປັນຮ່ວງທຶນດັ່ງນີ້:
  - ຮ່ວງທຶນ ດ້ານນະໂຍບາຍ ແລະ ສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ 12 ໂຄງການຍ່ອຍ ຈຳນວນງົບປະມານ 9,6 ຕື້ກີບ;
  - ຮ່ວງທຶນດ້ານຊີວະນາໆພັນ ແລະ ປ່າໄມ້ ຈຳນວນ 10 ໂຄງການ, ລວມມູນຄ່າໂຄງການ 7 ຕື້ກວ່າກີບ;
  - ຮ່ວງທຶນ ດ້ານສິ່ງແວດລ້ອມ ແລະ ຄວບຄຸມມົນລະກິດ ຈຳນວນ 22 ໂຄງການ, ລວມມູນຄ່າໂຄງການ 10.4 ຕື້ກວ່າກີບ;
  - ຮ່ວງທຶນການຄຸ້ມຄອງຊັບພະຍາກອນນ້ຳ ຈຳນວນ 1 ໂຄງການ ລວມມູນຄ່າໂຄງການ 799,925 ກີບ;
  - ຮ່ວງທຶນ ດ້ານການຄຸ້ມຄອງທີ່ດິນ ຈຳນວນ 5 ໂຄງການ, ລວມມູນຄ່າ 3.4 ຕື້ກວ່າກີບ;
  - ຮ່ວງທຶນການປ່ຽນແປງດິນຟ້າອາກາດ 4 ໂຄງການຍ່ອຍ ຈຳນວນງົບປະມານ 3,16 ຕື້ກີບ.

ລ/ດ	ຮ່ວງທຶນ	%ຈັດສັນ	ສະເລ່ຍຕໍ່ປີ	2021-2025	ປະຕິບັດໄດ້ 2021-2025	ລວມ ໂຄງການ	ໝາຍເຫດ
1	ຮ່ວງທຶນ ດ້ານນະໂຍບາຍ ແລະ ສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ	30%	3,361,200,000	16,806,000,000	9,603,718,000	10	57%
2	ຮ່ວງທຶນ ດ້ານອະນຸລັກຊີວະນາໆພັນ ລວມທັ້ງປ່າໄມ້ ແລະ ພັດທະນາຊຸມຊົນ	15%	1,680,600,000	8,403,000,000	6,805,342,000	12	81%
3	ຮ່ວງທຶນດ້ານສິ່ງແວດລ້ອມ ລວມທັ້ງຄວບຄຸມມົນລະພິດ	20%	2,240,800,000	11,204,000,000	10,434,268,000	22	93%
4	ຮ່ວງທຶນ ດ້ານການຄຸ້ມຄອງຊັບພະຍາກອນນ້ຳແບບຍືນຍົງ	15%	1,680,600,000	8,403,000,000	799,925,000	5	10%
5	ຮ່ວງທຶນ ດ້ານການຄຸ້ມຄອງທີ່ດິນແບບຍືນຍົງ	10%	1,120,400,000	5,602,000,000	3,452,000,000	1	62%
6	ຮ່ວງທຶນການປ່ຽນແປງດິນຟ້າອາກາດ	10%	1,120,400,000	5,602,000,000	3,167,600,000	4	57%
	ລວມ:	100%	11,204,000,000	56,020,000,000	34,262,853,000	54	61%

4.4. ກົນໄກການເງິນບ້ອງທຶນປ່າໄມ້

ແຫຼ່ງລາຍຮັບຂອງ ກປປ ຕົ້ນຕໍ ມີ 12 ແຫຼ່ງຕາມດຳລັດ 567/ລບ, ໝວດ 2, ມາດຕາ 5 ດັ່ງນີ້:

1) ງົບປະມານຂອງລັດ ຕາມການຈັດສັນງົບປະມານປະຈຳປີ;
2) ຄ່າບຸລະນະປ່າໄມ້ ຫຼື ຄ່າຟື້ນທະນຸກໄມ້ ແລະ ເຄື່ອງປ່າຂອງດົງ ທົດແທນ;
3) ຊາວສ່ວນຮ້ອຍ ຈາກລາຍຮັບ ຈາກການຂາຍໄມ້ ແລະ ເຄື່ອງປ່າຂອງດົງ ທີ່ຂຸດຄົ້ນຈາກເຂດຫັນປ່ຽນ ທີ່ດິນປ່າໄມ້;
4) ສາມສິບສ່ວນຮ້ອຍ ຈາກລາຍຮັບ ຂອງການຂາຍໄມ້ ທີ່ຂຸດຄົ້ນຈາກປ່າຜະລິດ;
5) ຊາວສ່ວນຮ້ອຍ ຈາກການຂາຍໄມ້ ແລະ ເຄື່ອງປ່າຂອງດົງ ທີ່ຮິບເປັນຂອງລັດ;
6) ສິບສ່ວນຮ້ອຍ ຈາກລາຍຮັບ ຂອງການຫັນປ່ຽນທີ່ດິນປ່າໄມ້ ໄປຮັບໃຊ້ເປົ້າຫມາຍອື່ນ;

7) ຊາວສ່ວນຮ້ອຍ ຈາກລາຍຮັບ ຂອງການດຳເນີນກິດຈະການທ່ອງທ່ຽວທຳມະຊາດ ແລະ ອື່ນໆ;
8) ເກົ້າສິບສ່ວນຮ້ອຍ ຈາກລາຍຮັບ ຂອງການຄ້າຂາຍການກອນປ່າໄມ້;
9) ຊາວສ່ວນຮ້ອຍ ຈາກລາຍຮັບຄ່າປັບໃຫມ ແລະ ຄ່າທົດແທນຄວາມເສຍຫາຍຕໍ່ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
10) ການຊ່ວຍເຫຼືອ ຂອງ ອົງການຈັດຕັ້ງ ແລະ ສະຖາບັນການເງິນ ທັງພາຍໃນ ແລະ ຕ່າງປະເທດ;
11) ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
12) ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດຫມາຍ.

4.5. ນະໂຍບາຍສະໜອງທຶນບ້ອງປ່າໄມ້

ນະໂຍບາຍສະໜອງທຶນ ຂອງກອງທຶນປົກປັກຮັກສາປ່າໄມ້ ນຳໃຊ້ເຂົ້າໃນເປົ້າຫມາຍ ດັ່ງນີ້:

1) ຄົ້ນຄວ້າສ້າງ ແລະ ປັບປຸງ ນະໂຍບາຍ, ຍຸດທະສາດ ແລະ ນິຕິກຳ ກ່ຽວກັບວຽກງານຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້;
2) ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ກົດຫມາຍ, ລະບຽບການ ແລະ ຂໍ້ມູນ ຂ່າວສານ ປ່າໄມ້ ແລະ ທີ່ດິນປ່າໄມ້;
3) ຝຶກອົບຮົມ ວິຊາການກ່ຽວກັບວຽກງານປ່າໄມ້;
4) ຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ, ປົກປັກຮັກສາ ແລະ ພັດທະນາປ່າໄມ້;
5) ປະຕິບັດ ແຜນງານ, ໂຄງການ, ຕິດຕາມກວດກາ ແລະ ແກ້ໄຂ ບັນຫາວຽກງານປ່າໄມ້, ທີ່ດິນປ່າໄມ້, ສັດ ນ້ຳ ແລະ ສັດປ່າ;

ການສະໜອງງົບປະມານ ຂອງກອງທຶນປົກປັກຮັກສາປ່າໄມ້ ໃນໄລຍະປີ 2021 – 2025 ສາມາດສະໜອງ ງົບປະມານໃຫ້ ແກ່ວຽກງານຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ຊຶ່ງສາມາດສະໜອງງົບປະມານໄດ້ທັງໝົດຈຳນວນ 110,698,552,656 ກີບ (ໜຶ່ງຮ້ອຍສິບຕື້ຫົກຮ້ອຍເກົ້າສິບແປດລ້ານຫ້າແສນຫ້າສິບສອງພັນຫົກຮ້ອຍຫ້າສິບຫົກ ກີບ). ໃນນີ້, ໄດ້ເບີກຈ່າຍໃຫ້ແກ່ວຽກງານດັ່ງນີ້:

- ເຄື່ອງປ່າຂອງດົງ: ເບີກຈ່າຍ ເງິນລາຍຮັບ ຈາກເຄື່ອງປ່າຂອງດົງ, ພັນທະປຸກໄມ້, ຄ່າປຸກປ່າທົດແທນ ແລະ ຈາກ ການຂາຍໄມ້ ແລະ ເຄື່ອງປ່າຂອງດົງ ທີ່ຮິບເປັນຂອງລັດ ຢູ່ຂັ້ນທ້ອງຖິ່ນ, ຄ່າທຳນຽມ ຫັນປ່ຽນທີ່ດິນປ່າໄມ້ ຕາມມະຕິສະພາແຫ່ງຊາດ (10%) ແລະ ຄ່າທຳນຽມ ຫັນປ່ຽນທີ່ດິນປ່າໄມ້ ຕາມມະຕິສະພາຂັ້ນທ້ອງຖິ່ນ (10%) ເປັນຈຳນວນ 17,176,000,000 ກີບ;
- ຕາມມະຕິສະພາແຫ່ງຊາດ: ເບີກຈ່າຍ ເງິນລາຍຮັບ ຈາກບັນດາໂຄງການລົງທຶນ ຕາມມະຕິ ສະພາແຫ່ງຊາດ ໃນ ການປະຕິບັດພັນທະຈ່າຍຄ່າບໍລິການທາງດ້ານວິຊາການ, ຄ່າບໍລິການລະບົບນິເວດປ່າໄມ້, ຄ່າທົດແທນຊີວະ ນາໆ ພັນ ແລະ ຄ່າປຸກໄມ້ທົດແທນ ທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍປ່າໄມ້ ເປັນເງິນກີບຈຳນວນ 93,522,552,656 ກີບ ແລະ ເປັນເງິນໂດລາສະຫະລັດ ຈຳນວນ 2,650,289.79 ໂດລາສະຫະລັດ.

V. ຜົນສຳເລັດການປະຕິບັດລາຍຮັບ-ລາຍຈ່າຍ ດ້ານສິ່ງແວດລ້ອມ

5.1. ການປະຕິບັດລາຍຮັບ

ໃນໄລຍະ 05 ປີ (2021-2025) ຫ້ອງການກອງທຶນ ໄດ້ຄາດຄະເນສ້າງລາຍຮັບ ໃຫ້ໄດ້ 62.47 ລ້ານໂດລາ (ທຶນພາຍໃນ 6.65 ລ້ານໂດລາ ແລະ ທຶນສາກົນ 55.82 ລ້ານໂດລາ). ຜ່ານການຈັດຕັ້ງແຜນລະດົມທຶນ ໃນໄລຍະ ດັ່ງກ່າວ ຫ້ອງການ ກອງທຶນ ສາມາດປະຕິບັດລາຍຮັບໄດ້ປະມານ 49.5 ລ້ານໂດລາ ເທົ່າກັບ 79% ຂອງແຜນການ 5 ປີ (ໃນນີ້, ທຶນພາຍໃນ 17.8 ລ້ານໂດລາ ເທົ່າກັບ 267% ລື່ນແຜນການ167% ຂອງ ແຜນການ 5 ປີ ແລະ ທຶນສາກົນ 34.85 ລ້ານໂດລາ ເທົ່າກັບ 62% ຂອງແຜນການ 5 ປີ ລາຍລະອຽດມີດັ່ງນີ້:

- **ທຶນພາຍໃນ:**
  - ລາຍຮັບຈາກດອກເບ້ຍຕົ້ນທຶນເງິນກູ້ ຈຳນວນ 2,243,563 USD;
  - ລາຍຮັບຈາກງົບປະມານເກັບລາຍຮັບຈາກ ພັນທະສິ່ງແວດລ້ອມ ຂອງ ບັນດາໂຄງການ ລົງທຶນ ແລະ ກິດຈະການຕ່າງໆ ຈຳນວນ 9.147,500 USD;
  - ລາຍຮັບຈາກ ງົບປະມານຕິດຕາມກວດກາດ້ານສິ່ງແວດລ້ອມໄດ້ທັງໝົດ 6,367,486 ລ້ານ ໂດລາສະຫະລັດ
  - ລາຍຮັບຈາກງົບປະມານ ຄຸ້ມຄອງອ່າງຮັບນ້ຳ ສະເລ່ຍ 53,749 ໂດລາສະຫະລັດ;
- **ທຶນສາກົນ:**

  ໄດ້ປະຕິບັດການຄຸ້ມຄອງໂຄງການສາກົນ ຈຳນວນ 8 ໂຄງການ (LENS2, LLL, IGFLL,SUIGFLM, UNDP, RPSP, Ebs-UNEP, PWMP) ມູນຄ່າລວມ 61 ລ້ານໂດລາ ສະຫະລັດ ແລະ 30 ລ້ານເອີໂຣ

ນອກນັ້ນ ກໍໄດ້ສະສົມທຶນ ຈາກລາຍຮັບທຶນພາຍໃນ ຂອງ ກອງທຶນ ເພື່ອໄປເພີ່ມໃສ່ ຕົ້ນທຶນເງິນຝາກ ຈາກ 6.5 ລ້ານໂດລາ ມາເປັນ 10.92 ລ້ານໂດລາ ໂດຍການຈັດສັນແບ່ງປັນ ລາຍຮັບທຶນພາຍໃນ ຂອງ ກອງທຶນ ໃນ ແຕ່ລະປີ ຈຳນວນ 30% ຂອງ ລາຍຮັບທີ່ເກັບໄດ້ ແລະ ການສະສົມທຶນດັ່ງກ່າວ ເປັນແຫຼ່ງທຶນທີ່ຍືນຍົງ ຂອງ ກອງທຶນ ແລະ ສາມາດຜັນຂະຫຍາຍ ມາເປັນລາຍຮັບ ໄດ້ສະເລ່ຍ 12.85 ຕື້ກີບ ຕໍ່ປີ.

5.2. ການປະຕິບັດລາຍຈ່າຍ:

ໃນໄລຍະ 5 ປີ ຜ່ານມາ ຫ້ອງການກອງທຶນ ສາມາດປະຕິບັດລາຍຈ່າຍທຶນສິ່ງແວດລ້ອມໄດ້ ຈຳນວນ 66.17 ຕື້ກວ່າກີບ ແລະ ປະຕິບັດລຍາຈ່າຍທຶນສາກົນໄດ້ 31.7 ລ້ານໂດລາສະຫະລັດ, ຊຶ່ງໄດ້ມີລາຍລະອຽດ ດັ່ງນີ້:

ທຶນພາຍໃນ:

- ໄດ້ເບີກຈ່າຍງົບປະມານ ໃຫ້ໂຄງການຍ່ອຍທຶນພາຍໃນ ຈຳນວນ **78** ໂຄງການ ສະເລ່ຍງົບປະມານທັງ ໝົດ **29.7** ຕື້ກວ່າກີບ, ຊຶ່ງສາມາດແຍກລາຍຈ່າຍແຕ່ລະຮ່ວງທຶນໄດ້ດັ່ງນີ້ (ຕາຕະລາງຮ່ວງທຶນ):
  - ຮ່ວງທຶນນະໂຍບາຍ ໄດ້ເບີກຈ່າຍງົບປະມານໃຫ້ກັບ ໂຄງການຍ່ອຍ **17** ໂຄງການ ງົບປະມານລວມ **6.8** ຕື້ກີບ ນະໂຍບາຍມີ 6 ໂຄງການ
  - ຮ່ວງທຶນຊີວະນາໆພັນ ໄດ້ເບີກຈ່າຍງົບປະມານໃຫ້ກັບ ໂຄງການຍ່ອຍ **21** ໂຄງການ ງົບປະມານລວມ **8.4** ຕື້ກີບ ຮ່ວງທຶນໃນປີ 2025
  - ຮ່ວງທຶນຄວບຄຸມມົນລະພິດ ແລະ ສິ່ງແວດລ້ອມ ໄດ້ເບີກຈ່າຍງົບປະມານໃຫ້ກັບ ໂຄງການຍ່ອຍ **22** ໂຄງການ ງົບປະມານລວມ **7.2** ຕື້ກີບ
  - ຮ່ວງທຶນຄຸ້ມຄອງທີ່ດິນ ໄດ້ເບີກຈ່າຍງົບປະມານໃຫ້ກັບ ໂຄງການຍ່ອຍ **6** ໂຄງການ ງົບປະມານລວມ **3.05** ຕື້ກີບ
  - ຮ່ວງທຶນຄຸ້ມຄອງຊັບພະຍາກອນນ້ຳ ໄດ້ເບີກຈ່າຍງົບປະມານໃຫ້ກັບ ໂຄງການຍ່ອຍ **8**ໂຄງການ ງົບປະມານລວມ **2.11** ຕື້ກີບ.
  - ຮ່ວງທຶນປ່ຽນແປງດິນຟ້າອາກາດ ໄດ້ເບີກຈ່າຍງົບປະມານໃຫ້ກັບ ໂຄງການຍ່ອຍ **4** ໂຄງການ ງົບປະມານລວມ **2.18** ຕື້ກີບ.
- ເບີກຈ່າຍເງິນຕິດຕາມກວດກາ ໃນ ໄລຍະປີ 2023-2025 ກສປ ສາມາດປະຕິບັດລາຍຈ່າຍ ງົບປະມານ ຕິດຕາມກວດກາດ້ານສິ່ງແວດລ້ອມ ແລະ ອ່າງຮັບນ້ຳ ໃຫ້ກັບສູນກາງ ແລະ ແຂວງ ທັງໝົດ 36.17 ຕື້ກີບ.

ທຶນສາກົນ:

ໄດ້ເບີກຈ່າຍງົບປະມານໂຄງການສາກົນ ຈຳນວນ 8 ໂຄງການ (LENS2, LLL, IGFLL,SUIGFLM, UNDP, RPSP, Ebs-UNEP, PWMP) ໃນການຈັດຕັ້ງປະຕິບັດກິດຈະກຳໂຄງການຍ່ອຍໄດ້ທັງໝົດ **31.7** ລ້ານໂດລາສະຫະລັດ.

(ຕະລາງຮ່ອງທຶນ)

ລາຍການ	ຍອດມລວມໂຄງການ	ແຜນຄວາມຕ້ອງການເຜດານງົບປະມານ 2021-2025	ເບີກຈ່າຍໄດ້ຕົວຈິງ 2021-2025	ຄິດໄລ່ເປັນ%
ຮ່ອງທຶນ ດ້ານນະໂຍບາຍ	**17**	**2,090,899,691**	**6,776,391,221**	**56%**
ຮ່ອງທຶນ ດ້ານຊີວະນາໆພັນ	**21**	**13,467,141,710**	**8,405,014,865**	**62%**
ຮ່ອງທຶນ ດ້ານສິ່ງແວດລ້ອມ, ຄອບຄຸມ ແລະ ແກ້ໄຂມົນລະພິດ	**22**	**11,404,355,242**	**7,197,521,584**	**63%**
ຮ່ອງທຶນ ດ້ານຄຸ້ມຄອງທີ່ດິນແບບຍືນຍົງ	**6**	**4,831,382,340**	**3,056,348,828**	**63%**
ຮ່ອງທຶນ ດ້ານຄຸ້ມຄອງນ້ຳແບບຍືນຍົງ	**8**	**3,940,164,940**	**2,114,670,900**	**54%**
ຮ່ອງທຶນ ປ່ຽນແປງດິນຟ້າອາກາດ	**4**	**3,475,133,000**	**2,186,581,000**	**63%**
ລວມທັງໝົດ	**78**	**49,209,076,923**	**29,736,528,398**	**60%**

VI. ຜົນສຳເລັດການປະຕິບັດລາຍຮັບ-ລາຍຈ່າຍ ຂອງປ່າໄມ້

6.1. ການປະຕິບັດລາຍຮັບ:

- **ປະຕິບັດເກັບລາຍຮັບເຄື່ອງປ່າຂອງດົງ.**

ລາຍຮັບຂອງກອງທຶນ ເກັບຕາມ ດຳລັດ 567/ລບ, ໝວດ 2, ມາດຕາ 5 ລວມທັງໝົດມີ 12 ແໜ່ງລາຍຮັບ ແລະ ສາມາດແຍກໃຫ້ເຫັນການເກັບລາຍຮັບຕາມແຜນຄາດຄະເນ ປີ 2021-2025 ຈາກ 3 ແໜ່ງລາຍຮັບ ຈຳນວນເງິນ: **39,001,381,860 ກີບ**, ເກັບໄດ້ຕົວຈິງຈຳນວນ: 41,589,286,039 ກີບ, ເທົ່າກັບ 107% ເຫັນວ່າການເກັບລາຍຮັບໄດ້ຫຼີ່ນຄາດໝາຍ 7% ຫລືເທົ່າກັບ 2.6 ຕື້ກີບ ດັ່ງຕາຕະລາງ 1 ແລະ ຕາຕະລາງທີ 2 ສາມາດແຍກໃຫ້ເຫັນການເກັບລາຍຮັບເຂົ້າກອງທຶນ ຂອງບັນດາ 18 ແຂວງ ດັ່ງນີ້:

1. ເກັບໄດ້ຈາກ ຄ່າທຳນຽມ ຫັນປ່ຽນທີ່ດິນປ່າໄມ້ (10%) ຕາມມະຕິສະພາແຫ່ງຊາດ ຈຳນວນ: 12,003,548,500 ກີບ;
2. ເກັບໄດ້ຈາກ ຂາຍໄມ້ ແລະ ເຄື່ອງປ່າຂອງດົງ ທີ່ຮິບເປັນຂອງລັດ ຈຳນວນ: 2,434,598,518 ກີບ;
3. ເກັບໄດ້ຈາກ ເຄື່ອງປ່າຂອງດົງ ຈຳນວນ: 27,151,139,021 ກີບ;

- **ລາຍຮັບ ຕາມມະຕິສະພາແຫ່ງຊາດ ໂຄງການລົງທຶນ (ພະລັງງານ ແລະ ບໍ່ແຮ່) ທີ່ມອບຄ່າພັນທະ ຟື້ນຟູປ່າ ແລະ ປູກປ່າທົດແທນ.**

ລາຍຮັບໃນປີ 2020-2025 ໄດ້ຮັບງົບປະມານ ຟື້ນຟູປ່າ ແລະ ປູກປ່າທົດແທນ, ຄ່າບໍລິການລະບົບນິເວດປ່າໄມ້, ຄ່າທົດແທນຊີວະນາໆພັນ, ຄ່າບໍລິການທາງດ້ານວິຊາການ ຈາກ ບັນດາໂຄງການລົງທຶນ ທີ່ຫັນປ່ຽນທີ່ດິນປ່າໄມ້ ຕາມມະຕິສະພາແຫ່ງຊາດ ທັງໝົດ 30 ໂຄງການ ເຊິ່ງຮັບເປັນເງິນກີບ ທັງໝົດ 109.34 ຕື້ກວ່າກີບ ແລະ ຮັບເປັນສະກຸນເງິນໂດລາສະຫະລັດ 3.6 ລ້ານໂດລາສະຫະລັດ ເຊິ່ງປະກອບມີ ໂຄງການລົງທຶນດ້ານພະລັງງານຈຳນວນ 22 ໂຄງການ ແລະ ໂຄງການລົງທຶນດ້ານບໍ່ແຮ່ຈຳນວນ 8 ໂຄງການ.

6.2. ການປະຕິບັດລາຍຈ່າຍ:

➢ **ປະຕິບັດເກັບລາຍຈ່າຍເຄື່ອງປ່າຂອງດົງ**

ໃນໄລຍະປີ 2021-2025 ສາດມາດເກັບລາຍຮັບຈາກ ຄ່າທຳນຽມ ຫັນປ່ຽນທີ່ດິນປ່າໄມ້ ຕາມມະຕິ ສະພາ, ການເກັບລາຍຮັບຈາກ ເຄື່ອງປ່າຂອງດົງ ແລະ ການຂາຍໄມ້ ທີ່ຮິບເປັນຂອງລັດ ເກັບງົບປະມານໄດ້ທັງ ໝົດຈຳນວນ 41.60 ຕື້ກີບ. ໃນນີ້ ໄດ້ປະຕິບັດລາຍຈ່າຍ ໄດ້ທັງໝົດ 17 ຕື້ກ່ວາກີບ ອີງຕາມແຜນຈັດສັນ ງົບປະມານ ປະຈຳແຕ່ລະປີ ທີ່ກະຊວງການເງິນອະນຸມັດເຜດານງົບປະມານ ຊຶ່ງໄດ້ປະຕິບັດລ່າຍຈ່າຍ ຂັ້ນສູນກາງນຳ ໃຊ້ ຈຳນວນ 5 ຕື້ກ່ວາກີບ ເທົ່າກັບ 30% ຂອງລາຍຈ່າຍ ແລະ ຂັ້ນທ້ອງຖິ່ນ (18 ແຂວງ) ນຳໃຊ້ຈຳນວນ 12 ຕື້ກີບ ເທົ່າກັບ 70% ຂອງລ່າຍຈ່າຍ, ເຊິ່ງຈັດຕັ້ງປະຕິບັດກິດຈະກຳ ໄດ້ດັ່ງນີ: 1). ຄຸ້ມຄອງ ປ່າສະຫງວນ, ປ່າປ້ອງກັນ, ປ່າ ຜະລິດ, ປ່າໄມ້ບ້ານ 2). ກວດກາລາດຕະເວນ, ຟື້ນຟູປ່າ, ປ້ອງກັນໄຟປ່າ 3). ສ້າງ, ປັບປຸງນິຕິກຳ ແລະ ເຜີຍແຜ່ ວຽກງານປົກປັກຮັກສາປ່າໄມ້ 4). ຊຸກຍູ້, ຕິດຕາມ ການເກັບລາຍຮັບ ທີ່ນຳໃຊ້ງົບປະມານກອງທຶນປົກປັກຮັກສາ ປ່າໄມ້ 5). ປະເມີນຜົນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ປ່າໄມ້ ປະຈຳປີ ລາຍລະອຽດລ່າຍຈ່າຍ 2021-2025 ດັ່ງຕາຕະລາງລຸ່ມນີ:

ລ/ດ	ພາກສ່ວນ	2021	2022	2023	2024	2025	ລວມ
1	ຂັ້ນສູນກາງ	196,000,000	480,000,000	1,200,000,000	1,650,000,000	2,100,000,000	5,626,000,000
2	ຂັ້ນທ້ອງຖິ່ນ (18 ແຂວງ)	-	-	2,800,000,000	3,850,000,000	4,900,000,000	11,550,000,000
ລວມ		196,000,000	480,000,000	4,000,000,000	5,500,000,000	7,000,000,000	17,176,000,000

➢ **ປະຕິບັດເກັບລາຍຈ່າຍຟື້ນຟູປ່າ ແລະ ປູກປ່າທົດແທນ, ຄ່າບໍລິການລະບົບນິເວດປ່າໄມ້, ຄ່າທົດແທນຊີວະນາໆ ພັນ, ຄ່າບໍລິການທາງດ້ານວິຊາການ ຈາກ ບັນດາໂຄງການລົງທຶນ ທີ່ຫັນປ່ຽນທີ່ດິນປ່າໄມ້ ຕາມມະຕິສະພາແຫ່ງ ຊາດ**

ລາຍຈ່າຍໃນປີ 2023-2025 ສາມາດປະຕິບັດລາຍຈ່າຍງົບປະມານ ຟື້ນຟູປ່າ ແລະ ປູກປ່າທົດແທນ, ຄ່າບໍລິການ ລະບົບນິເວດປ່າໄມ້, ຄ່າທົດແທນຊີວະນາໆພັນ, ຄ່າບໍລິການທາງດ້ານວິຊາການ ຈາກ ບັນດາໂຄງການລົງທຶນ ທີ່ ຫັນປ່ຽນທີ່ດິນປ່າໄມ້ ຕາມມະຕິສະພາແຫ່ງຊາດ ໄດ້ທັງໝົດເປັນເງິນກີບ ຈຳນວນເງິນ 93.5 ຕື້ກວ່າກີບ ແລະ ເບີກ ຈ່າຍເປັນເງິນໂດລາ ຈຳນວນເງິນ 2,6 ລ້ານໂດລາສະຫະລັດ

VII. ຜົນສຳເລັດໂດຍລວມຂອງບ້ວງງົບປະມານປ່າໄມ້

ໃນໄລຍະ ປີ 2021-2025 ກອງທຶນປົກປັກຮັກສາປ່າໄມ້ ໄດ້ຈັດຕັ້ງປະຕິບັດວຽກງານຕິດຕາມ, ກວດກາ, ການ ເກັບລາຍຮັບຈາກ 2 ບ້ວງຫຼັກ ປະກອບມີ: 1) ລາຍຮັບຈາກ ຄ່າທຳນຽມ ຫັນປ່ຽນທີ່ດິນປ່າໄມ້ (10%), ການເກັບ ລາຍຮັບຈາກ ເຄື່ອງປ່າຂອງດົງ ແລະ ການຂາຍໄມ້ ທີ່ຮິບເປັນຂອງລັດ. 2) ລາຍຮັບ ຕາມມະຕິສະພາແຫ່ງຊາດ ໂຄງການລົງທຶນ ທີ່ມອບຄ່າພັນທະ ຟື້ນຟູປ່າ ແລະ ປູກປ່າທົດແທນ ເຊິ່ງຈັດຕັ້ງປະຕິບັດຕາມກອບດັ່ງນີ:

- ໄດ້ດຳເນີນການເກັບກຳຂໍ້ມູນບັນດາຄ່າພັນທະ ຟື້ນຟູປ່າ ແລະ ປູກປ່າທົດແທນ ຕາມມະຕິສະພາສະພາ ແຫ່ງຊາດ ແລະ ຕິດຕາມການມອບໂອນງົບປະມານເຂົ້າຄັງເງິນແຫ່ງຊາດຕາມລະບຽບການ;

- ການຈັດສັນງົບປະມານ ໃຫ້ສູນກາງ ແລະ ທ້ອງຖິ່ນ ແມ່ນອີງຕາມເພດານ ຂອງກະຊວງການເງິນວາງອອກ ແຕ່ລະປີ;
- ເຜີຍແຜ່ບັນດານິຕິກຳຕ່າງໆ ທີ່ກ່ຽວຂ້ອງ ໃຫ້ ສູນກາງ ແລະ ທ້ອງຖິ່ນ, ຜູ້ພັດທະນາໂຄງການລົງທຶນ;
- ດຳເນີນກອງປະຊຸມສະຫຼຸບຜົນການຈັດຕັ້ງປະຕິບັດວຽກງານປົກປັກຮັກສາປ່າໄມ້ໃນແຕ່ລະປີ.
- ຜ່ານການຊຸກຍູ້, ຕິດຕາມ ແລະ ປະເມີນ ການຈັດຕັ້ງປະຕິບັດແຜນຄາດຄະເນເກັບລາຍຮັບ ປະຈຳປີ ເຫັນວ່າ ບາງແຂວງຍັງບໍ່ສາດມາດຈັດຕັ້ງປະຕິບັດການເກັບລາຍຮັບຕາມດຳລັດ 567/ລບ, ລົງວັນທີ 16 ກັນຍາ 2021, ໝວດ 2 ມາດຕາ 5 ແລະ ລາຍຮັບ ຕາມມະຕິສະພາແຫ່ງຊາດ ໂຄງການລົງທຶນ ທີ່ມອບຄ່າຟັນທະ ຟື້ນຟູປ່າ ແລະ ປູກປ່າທົດແທນ ບາງບໍລິສັດຍັງບໍ່ສາມາດຈັດຕັ້ງປະຕິບັດ ການຖອກຟັນທະຕາມສັນຍາ
- ການປະຕິບັດລາຍຈ່າຍ ມອບຟັນທະຂອງບໍລິສັດຜູ້ພັດທະນາ ໂຄງການລົງທຶນ ຕາມມະຕິສະພາແຫ່ງຊາດ ບາງບໍລິສັດຍັງປະຕິບັດບໍ່ທັນໄດ້ດີ.
- ການຈັດສັນງົບປະມານລາຍຈ່າຍ ໃຫ້ບັນຂັ້ນສູນກາງ ແລະ ທ້ອງຖິ່ນ ຍັງບໍ່ທັນພຽງພໍ ຍ້ອນການຈັດແບ່ງ ງົບປະມານ ແມ່ນປະຕິບັດຕາມເພດານແຜນຈັດສັນ ປະຈຳແຕ່ລະປີ ທີ່ກະຊວງການເງິນອະນຸມັດ.

VIII. ລາຍງານຄວາມຄືບໜ້າການຮ່ວມມືກັບສາກົນ

8.1. ລາຍງານຄວາມຄືບໜ້າວຽກງານຮ່ວມມືສາກົນ ແລະ ການກະກຽມເຂົ້າເປັນສະມາຊິກຂອງ GCF

 # ວຽກງານຮ່ວມມື:

ໄລຍະ 5 ປີ ຜ່ານມາ ຫ້ອງການກອງທຶນໄດ້ສ້າງສາຍພົວພັນກັບບັນດາ ຄູ່ຮ່ວມງານສາກົນ ແລະ ບັນດາອົງການ ອົງການສະໜອງທຶນອື່ນ ໃນອະນຸພາກພື້ນ, ພາກພື້ນ ແລະ ລະດັບສາກົນ ເພື່ອຊອກຫາແຫຼ່ງທຶນໃໝ່ ແລະ ເພີ່ມສາຍ ພົວພັນໃນການຮ່ວມງານ ເພື່ອຍາດແຍ່ງທຶນຊ່ວຍເຫຼືອ ເຂົ້າມາຈັດຕັ້ງປະຕິບັດວຽກງານຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດແລ້ມ ແລະ ປ່າໄມ້. ນອກນັ້ນ ກໍຈັດຕັ້ງປະຕິບັດກົນໄກການຄຸ້ມຄອງງົບປະມານໂຄງການ ຕ່າງໆ ເປັນຕົ້ນ: WB, ADB, GEF, GCF ແລະ ອົງການຈັດຕັ້ງອື່ນໆ ພ້ອມທັງ ປະສານສົມທົບກັບພາກ ສ່ວນທີ່ ກ່ຽວຂ້ອງ ທັງໃນລະດັບສູນກາງ ແລະ ທ້ອງຖິ່ນ ເພື່ອເພີ່ມທະວີເຄືອຄ່າຍ ການຮ່ວມມື ແລະ ການຫັນເປັນຄູ່ຮ່ວມ ງານ ກັບ ອົງການຈັດຕັ້ງຕ່າງໆໃຫ້ຍືນຍົງເຊັ່ນ: ມະຫາ ວິທະຍາໄລແຫ່ງຊາດ, ຂະແໜງການທີ່ກ່ຽວຂ້ອງ, ອົງ ການຈັດຕັ້ງມະຫາຊົນ ແລະ ຊຸມຊົນທ້ອງຖິ່ນ ເພື່ອລະດົມຂົນຂວາຍທຶນ ຊຶ່ງໄລຍະຜ່ານມາເຫັນໄດ້ຜົນສຳເລັດພົ້ນ ເດັ່ນດັ່ງນີ້:

1. ໄດ້ຮ່ວມມືກັບທະນາຄານໂລກໃນການ ແລະ ກົມປ່າໄມ້ ໃນການ ກະກຽມ ແລະ ຈັດຕັ້ງປະຕິບັດໂຄງການ LLL ຊຶ່ງກອງທຶນ ແມ່ນໄດ້ຮັບຜິດຊອບຄຸ້ມຄອງງົບປະມານໃນບ້ອງກິດຈະກຳ ອົງປະກອບ 3.2 ແລະ 3.3ໄລຍະ ໂຄງການ 5 ປີ 2023-2027 ມູນຄ່າໂຄງການ 3.5ລ້ານ ດລຫ;
2. ໄດ້ຮ່ວມມືກັບອົງ ການ UNEP ແລະ ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ ໃນການການກຽມໂຄງການ ປັບຕົວຂອງຊຸມຊົນຕໍ່ສະພາບການປ່ຽນແປງດິນຟ້າອາກາດ Urban-Ebs ຊຶ່ງໄດ້ເອົາເງິນມາຜ່ານກອງທຶນເປັນ ຜູ້ຄຸ້ມຄອງບໍລິຫານກົນໄກທາງດ້ານການເງິນ ແລະ ການຈັດຊື້ ຂອງ ໂຄງການໄລຍະ 5 ປີ ເລີ່ມປີ 2020 ຫາ 2025 ມູນຄ່າໂຄງການ 10ລ້ານ ດລຫ;
3. ໄດ້ຮ່ວມມື ກັບອົງການຮ່ວມມືເຢຍລະມັນ GIZ ແລະ ກົມປ່າໄມ້ ໃນການກະກຽມ ແລະ ຈັດຕັ້ງປະຕິບັດ ໂຄງການ IGFLL ໄລຍະທີ1 ແລະ ໂຄງການ SUIGFLM ໄລຍະ2 ຊຶ່ງໄດ້ເອົາທຶນມາຜ່ານກອງທຶນ ເພື່ອເຮັດ ໜ້າທີ່ຄຸ້ມຄອງບໍລິຫານກົນໄກທາງດ້ານການເງິນ, ການຈັດຊື້ ແລະ ການປະສານງານໂຄງການ ໃຫ້ກັບໂຄງການ ດັ່ງກ່າວ ໄລຍະໂຄງການເລີ່ມ 2020-2027 ງົບປະມານສະເລ່ຍປະມານ 30ລ້ານ ເອີໂຣ;
4. ໄດ້ຮ່ວມກັບກົມປ່າໄມ້ ແລະ ກົມແຜນການ ແລະ ການເງິນ ກຊສ ກ່ຽວກັບການຮ່ວມມືກັບກອງທຶນ ສສ. ຫວຽດນາມ ຊຶ່ງໄດ້ແລກປ່ຽນບົດຮຽນ ກ່ຽວກັບການສ້າງລະບົບເກັບລາຍຮັບການບໍລິການລະບົບນິເວດ

(Payment for Ecosystem Service) ເພື່ອຖອດຖອນບົດຮຽນ ແລະ ເປັນແນວທາງຕໍ່ໜ້າໃຫ້ກັບກອງທຶນ ໃນການອອກແບບການເກັບລາຍຮັບ;

5. ຮ່ວມມືກັບອົງການຈັດຕັ້ງສາກົນອື່ນໆ ເປັນຕົ້ນ: GGGI, FAO, UNDP, ADB, EU, UNDP, GIZ ASIA ແລະ ອື່ນໆ ໃນການແລກປ່ຽນບົດຮຽນ ໃນການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ ແລະ ກົນໄກ ການລະດົມທຶນ ແລະ ສະໜອງທຶນ; ການຈັດຕັ້ງປະຕິບັດໂຄງການທຶນສົມທົບ, ວຽກງານການລະດົມທຶນ ແລະ ການສະໜອງທຶນ ຂອງກອງທຶນ, ຮ່ວມມືກັນດ້ານວຽກງານ carbon maket, ແລກປ່ຽນຂໍ້ມູນທາງດ້ານການ ລະດົມທຶນ ແລະ ສະໜອງທຶນໃຫ້ວຽກງານຊີວິນາໆພັນໃນ ສປປ ລາວ ລວມທັງກົນໄກການເກັບຄ່າລະບົບ ນິເວດ ແລະ ແລກປ່ຽນຂໍ້ມູນການໄກການບໍລິຫານງານ ຂອງກອງທຶນ ແລະຫັນເປັນຄູ່ຮ່ວມງານທີ່ແໜ້ນແຟ້ນ ກັບ GIZ;
6. ແລກປ່ຽນບົດຮຽນການລົງທຶນດ້ານກະສິກຳທີ່ສະຫຼາດທາງດ້ານດິນຟ້າອາກາດ ແລະ ການປະຕິບັດນະໂຍບາຍ ໃນພາກຕາເວັນອອກຊຽງໃຕ້ຂອງອາຊີ ທີ່ຊຽງໃໝ່ ປະເທດໄທ; ເຂົ້າຮ່ວມກອງປະຊຸມແລກປ່ຽນບົດຮຽນ ກ່ຽວ ກັບວຽກງານການປ່ຽນແປງດິນຟ້າອາກາດ ຊຶ່ງໃນນີ້ກອງທຶນ ໄດ້ນຳສະເໜີແລກປ່ຽນພາລະບົດບາດ ແລະ ກົນ ໄກການລະດົມທຶນ ແລະ ສະໜອງທຶນ ພ້ອມທັງການຄຸ້ມຄອງບໍລິຫານທຶນສາກົນ ໃນ ສປປ ລາວ ພ້ອມທັງການ ປັບປຸງກົນໄກ ກອງທຶນໃຫ້ຢູ່ໃນເງື່ອນໄຂຂອງ GCF ເພື່ອເຂົ້າເປັນ AE ແລະ ສາມາດລະດົມທຶນໄດ້ໂດຍກົງ ຈາກ GCF ທີ່ພະນິມເປັນ ປະເທດຈຳປູເຈຍ.

 # ການກະກຽມເຂົ້າເປັນອົງກອນແຫ່ງຊາດ DAE (ສະມາຊິກຂອງ GCF).

1) ໃນໄລຍະຜ່ານມາ ຫ້ອງການກອງທຶນປົກປັກຮັກ ສາສິ່ງແວດລ້ອມ (ຊຸ່ເກົ່າ) ໄດ້ຮ່ວມກັບ ອົງການຮ່ວມມື ລາວເຢຍລະມັນ ໂດຍຜ່ານກົມຄຸ້ມຄອງການປ່ຽນດິນຟ້າອາກາດ ແລະ ຈຸດປະສານງານແຫ່ງຊາດ NDA (National Designed Authorization)/ Focal point Lao PDR ພາຍໃຕ້ກົມແຜນການ ແລະ ການ ຮ່ວມມື ກຊສ ດຳເນີນແຜນການໃນການ ສ້າງຄວາມເຂັ້ມແຂງໃຫ້ ຫກປສ ເພື່ອສະໝັກເຂົ້າເປັນ "ອົງກອນ ແຫ່ງຊາດທີ່ສາມາດເຂົ້າເຖິງທຶນສາກົນ GCF ໄດ້ໂດຍກົງ" (Direct Accredited Entity -DAE) ໃນ ການຍາດແຍ່ງເອົາທຶນຊ່ວຍເຫຼືອລ້າຈາກສາກົນເຂົ້າມາ ສປປ ລາວ ເຊິ່ງໄດ້ຮັບທຶນຊ່ວຍເຫຼືອລ້າເປັນ 2 ໄລຍະ ໃນການຈັດຕັ້ງປະຕິບັດໂຄງການສ້າງຄວາມເຂັ້ມແຂງໃຫ້ ກອງທຶນ ຄື:

a. ໄລຍະທີ 1: ເລີ່ມແຕ່ປີ 2018-2020 ອົງການຮ່ວມມືລາວເຢຍລະມັນ ໂດຍຜ່ານກົມຄຸ້ມຄອງການປ່ຽນດິນ ຟ້າອາກາດ ໄດ້ສະໜັບສະໜຸນດ້ານວິຊາການ ໂດຍການວ່າຈ້າງບັນດາຊ່ຽວຊານສະເພາະດ້ານມາປະເມີນ ວຽກງານ ແລະ ການບໍລິຫານຄຸ້ມຄອງກອງທຶນ ທຽບໃສ່ເງື່ອນໄຂຂອງ GCF ໃນການເຂົ້າເປັນອົງກອນ ແຫ່ງຊາດ ຂອງ ກອງທຶນ ຊຶ່ງເຫັນວ່າ ມີຫລາຍດ້ານທີ່ຕ້ອງປັບປຸງ ປະກອບມີ ດ້ານເອກະສານຄູ່ມືຄຸ້ມກອງ ການຈັດ ຕັ້ງປະຕິບັດໂຄງການ 7 ເຫຼັ້ມ, ໂປແກມບັນຊີ, ລະບົບການຄຸ້ມຄອງຕິດຕາມ, ຍຸດທະສາດບົດບາດ ຍິງຊາຍ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ ຊຶ່ງ ຫກປສ ໄດ້ສືບຕໍ່ຄົ້ນຄ້ວາປັບປຸງ;
b. ໄລຍະທີ 2: ປີ 2021-2024 ຫກປສ ໄດ້ຮັບທຶນຊ່ວຍເຫຼືອລ້າ ຈາກ ອົງການ GCF ຜ່ານອົງການ UNOPs ເປັນຜູ້ຄຸ້ມຄອງການເບີກຈ່າຍງົບປະມານໃຫ້ ຫກປສ ພາຍໃຕ້ສັນຍາເລກທີ LAO-RS-009 ມູນຄ່າສັນຍາ ໂຄງການ 399,805 ໂດລາສະຫາລັດ ເພື່ອສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ ກສປ ກາຍເປັນອົງກອນແຫ່ງຊາດ ທີ່ສາມາດເຂົ້າເຖິງແຫຼ່ງທຶນສາກົນໄດ້ໂດຍກົງ ພ້ອມທັງ ກະກຽມບົດສະເໜີໂຄງການຂະໜາດນ້ອຍບໍ່ເກີນ 10ລ້ານ ໂດລາສະຫະລັດ ເພື່ອສະເໜີຂໍທຶນນຳ GCF;
c. ພ້ອມນັ້ນ, ໃນກອງປະຊຸມສະພາບໍລິຫານກອງທຶນ GCF (GCF-BOD-B.42) ໃນວັນທີ 10 ມິຖຸນາ 2025 ແລະ ໃນວັນທີ 3 ກໍລະກົດ 2025 ໃນວາລະທີ 5 ໄດ້ມີການພິຈາລະນາ ຮັບຮອງເອົາ 5 ອົງກອນແຫ່ງ ຊາດ ຂອງ 5 ປະເທດ ໃນການເຂົ້າເປັນຄູ່ຮ່ວມງານ ທີ່ສາມາດເຂົ້າເຖິງແຫຼ່ງທຶນໂດຍກົງ ຂອງກອງທຶນ GCF ເຊິ່ງໃນນັ້ນຫ້ອງການທຶນປົກປັກຮັກສາສິ່ງແວດລ້ອມ ກໍໄດ້ຖືກອະນຸມັດຮັບຮອງເຂົ້າເປັນອົງກອນ ແຫ່ງຊາດ ຂອງ ສປປ ລາວ ທີ່ສາມາດເຂົ້າເຖິງແຫຼ່ງທຶນສາກົນ.

d. ພາຍຫຼັງກອງທຶນປົກປັກຮັກສາສິ່ງແວດລ້ອມ ໄດ້ຖືກຊັບຊ້ອນໂຮມເຂົ້າກັບ ຫ້ອງການກອງທຶນປົກປັກຮັກສາປ່າໄມ້ ປ່ຽນຊື່ມາເປັນ ຫ້ອງການກອງທຶນປົກປັກຮັກສາສິ່ງແວດ ລ້ອມ ແລະ ປ່າໄມ້ ຂະບວນການສືບຕໍ່ເປັນອົງກອນແຫ່ງຊາດ ທີ່ສາມາດເຂົ້າເຖິງແຫຼ່ງທຶນໄດ້ໂດຍກົງ ແມ່ນ ໄດ້ມີການເລື່ອນການລົງນາມໃນສັນຍາ ຮ່ວມມືສອງຝ່າຍນຳຜູ້ໃຫ້ທຶນ (AMA: Accreditation Master Agreement) ເພື່ອເປັນຄູ່ຮ່ວມງານໂດຍກົງກັບ GCF ອອກໄປ ເນື່ອງຈາກ ກອງເລຂາ GCF ຕ້ອງການຄວາມຊັດເຈນກ່ຽວກັບທິດທາງ ພາລະບົດບາດ ຂອງກອງທຶນ ຈະເປັນອົງກອນກຸ້ມຕົນເອງ (Autonomous) ແລະ ສະເໜີກອງທຶນປັບປຸງ ດຳລັດກອງທຶນປົກປັກຮັກສິ່ງແວດ ລ້ອມ ແລະ ປ່າໄມ້ ສຳເລັດ ແລ້ວ ນຳສົ່ງໃຫ້ ກອງເລຂາ GCF ເພື່ອກວດກາຄືນ ກ່ອນຈຶ່ງຈະໄດ້ສືບຕໍ່ດຳເນີນການລົງນາມໃນສັນຍາ (AMA: Accreditation Master Agreement).

8.2. ລາຍງານຄວາມຄືບໜ້າການບໍລິການດ້ານການເງິນໃນການຄຸ້ມຄອງທຶນສາກົນ

ໃນໄລຍະ 5 ປີ ຜ່ານມາ ຫ້ອງການກອງທຶນ ໄລຍະຜ່ານມາໄດ້ເພີ່ມທະວີການຮ່ວມມື ແລະ ຫັນເປັນຄູ່ຮ່ວມງານ ກັບ ພາກສ່ວນຕ່າງໆຢ່າງເປີດກວ້າງ ໂດຍສະເພາະກັບຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນ ມະຫາວິທະຍາໄລ ແຫ່ງຊາດ ແລະ ປະຈຳພາກ, ບັນດາກະຊວງກ່ຽວຂ້ອງ, ອົງການຈັດຕັ້ງມະຫາຊົນ, ຊຸມຊົນ ທ້ອງຖິ່ນ ແລະ ສືບຕໍ່ເປັນຄູ່ຮ່ວມງານພ້ອມທັງລະດົມທຶນ ກັບ ອົງການຈັດຕັ້ງສາກົນຕ່າງໆ ເພື່ອຂັບເຄື່ອນການຈັດຕັ້ງປະຕິບັດວຽກງານ, ການສ້າງຄວາມສາມາດ ແລະ ການຄຸ້ມຄອງໂຄງການ ເປັນຕົ້ນ::

1. ຄຸ້ມຄອງງົບປະມານ ໂຄງການ Lao Landscapes and Livelihoods (LLL) ພາຍໃຕ້ ທຶນກູ້ຢືມຂອງ ທະນາຄານໂລກ ໄລຍະໂຄງການ 5 ປີ 2023-2027 ງົບປະມານທຶນຜ່ານ ຈຳນວນ 3.5 ລ້ານໂດລາ ສຳລັບອົງປະກອບຍ່ອຍ **3.2** ແລະ **3.3**. ໃນນີ້ ກອງທຶນ ໄດ້ຮັບ 15% ຂອງມູນຄ່າໂຄງການຈຳນວນ **520,000 USD** ເພື່ອນຳໃຊ້ເຂົ້າໃນກິດຈະກຳ ຂອງ ໂຄງການ;
2. ຄຸ້ມຄອງງົບປະມານ ໂຄງການ ການຈັດຕັ້ງປະຕິບັດການຄຸ້ມຄອງ, ພູມມີທັດປ່າໄມ້ ແລະ ຊີວິດການເປັນຢູ່ (Implementation of Governance, Forest Landscapes and Livelihoods IGFLL) ທຶນຊ່ວຍເຫຼືອລ້າ ພາຍໃຕ້ຜູ້ໃຫ້ທຶນ **GIZ** ໄລຍະໂຄງການ 5 ປີ 2020-2025 ງົບປະມານໂຄງການ ຈຳນວນ 11 ລ້ານເອໂຣ. ໃນນີ້ ກອງທຶນ ໄດ້ຮັບ **3%** ຂອງມູນຄ່າທຶນຜ່ານໂຄງການຈຳນວນ **400,000** ເອີໂຣ ເພື່ອໃຊ້ຈ່າຍເຂົ້າໃນວຽກງານກິດຈະກຳ ແລະ ບໍລິຫານ ພາຍໃຕ້ໂຄງການ;
3. ຄຸ້ມຄອງທຶນຜ່ານ ໂຄງການ ການຈັດຕັ້ງປະຕິບັດການຄຸ້ມຄອງ, ພູມມີທັດປ່າໄມ້ ແລະ ຊີວິດການເປັນຢູ່ (Implementation of Governance, Forest Landscapes and Livelihoods IGFLL) ທຶນຊ່ວຍເຫຼືອລ້າ ພາຍໃຕ້ຜູ້ໃຫ້ທຶນ **GIZ** ໄລຍະໂຄງການ 5 ປີ 2023-2027 ງົບປະມານໂຄງການ ຈຳນວນ **19.3** ລ້ານເອໂຣ. ໃນນີ້ ກອງທຶນ ໄດ້ຮັບ 4% ຂອງມູນຄ່າທຶນຜ່ານໂຄງການຈຳນວນ 85**0,000** ເອີໂຣ ເພື່ອໃຊ້ຈ່າຍເຂົ້າໃນວຽກງານກິດຈະກຳ ແລະ ບໍລິຫານ ພາຍໃຕ້ໂຄງການ;
4. ຄຸ້ມຄອງງົບປະມານ ໂຄງການສ້າງຄວາມທົນທານຂອງປະຊາຄອມ ໃນຕົວເມືອງ ເພື່ອປັບປຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ນຳໃຊ້ທ່າແຮງຂອງລະບົບນິເວດ **URBAN-EbS** ທຶນຊ່ວຍເຫຼືອລ້າ ພາຍໃຕ້ຜູ້ໃຫ້ທຶນ **UNEP** ໄລຍະໂຄງການ 5 ປີ 2020-2025 ງົບປະມານໂຄງການ ຈຳນວນ **10** ລ້ານໂດລາສະຫະລັດ. ໃນນີ້ ກອງທຶນ ໄດ້ຮັບ 4.2% ຂອງມູນຄ່າທຶນຜ່ານໂຄງການຈຳນວນ **34,000** ໂດລາສະຫະລັດ ເພື່ອໃຊ້ຈ່າຍເຂົ້າໃນວຽກງານກິດຈະກຳ ແລະ ບໍລິຫານ ຂອງ ກສປ ແລະ ພາຍໃຕ້ໂຄງການ;
5. ຄຸ້ມຄອງງົບປະມານ ໂຄງການ ຄຸ້ມຄອງມົນລະພິດ ແລະ ສິ່ງເສດເຫຼືອ (Pollution and Waste Management) **PWMP** ພາຍໃຕ້ທຶນກູ້ຢືມຂອງ ທະນາຄານໂລກ ໄລຍະໂຄງການ 5 ປີ 2025-2031 ງົບປະມານກອງທຶນຄຸ້ມຄອງ ຈຳນວນ 7.8 ລ້ານໂດລາ ສຳລັບອົງປະກອບ1. ໃນນີ້ ງົບປະມານຂອງກອງທຶນ ໄດ້ຮັບການຈັດສັນຈຳນວນ 1.7ລ້ານໂດລາສະຫະລັດ ສຳລັບກິດຈະກຳຂອງ ກອງທຶນ ພາຍໃຕ້ໂຄງການ;

6. ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ກອງທຶນໃນການພັດທະນາບົດສະເໜີໂຄງການກະກຽມຄວາມພ້ອມ ເພື່ອເຂົ້າເຖິງແຫຼ່ງທຶນໂດຍກົງ GCF ໂດຍອົງການ FAO,ພ້ອມນັ້ນ, ໃນຊ່ວງການກະກຽມຄວາມພ້ອມ ໃຫ້ແກ່ກອງທຶນ ກອງເລຂາ GCF ໄດ້ດຳເນີນການສ້າງຄວາມສາມາດໃຫ້ແກ່ກອງທຶນ ໂດຍການຊຸກຍູ້ການພັດທະນາບົດສະເໜີໂຄງການດ້ວຍຕົນເອງ ເພື່ອຂໍທຶນສະໜັບສະໜຸນບ້ວງກະກຽມມຄວາມພ້ອມ ຈາກ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ (GCF) ແລະ ສຶກສາເງື່ອນໄຂ, ມາດຖານ ແລະ ຄວາມເປັນໄປໄດ້ ຂອງອົງການສະໜອງທຶນໃນອະນຸພາກພື້ນ, ພາກພື້ນ ແລະ ລະດັບສາກົນ.

ພາກທີ II
ທິດທາງແຜນການ 5 ປີ (2026-2030) ໃນການຈັດຕັ້ງປະຕິບັດວຽກງານ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້

I. ທິດທາງລວມ

ໃນສົກປີ 2026-2030, ຫ້ອງການກອງທຶນປົກປັກຮັກສາວິ່ງແວດລ້ອມ ແລະ ປ່າໄມ້ ຈະໄດ້ສືບຕໍ່ສຸມໃສ່ ສ້າງຄວາມເຂັ້ມແຂງ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ວຽກງານ ການຄຸ້ມຄອງບໍລິຫານການເງິນສິ່ງແວດລ້ອມ ແລະ ປ່າໄມ້, ການຮ່ວມມື, ການສະໜອງທຶນ, ການລະດົມທຶນ ແລະ ການຄຸ້ມຄອງໂຄງການ ໂດຍມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ, ທ້ອງຖິ່ນ ແລະ ສາກົນ ໃຫ້ມີຄວາມກົມກຽວ ພ້ອມທັງ ຫັນເປັນທັນສະໄໝ, ສ້າງພະນັກງານ ໃຫ້ມີຄວາມຊຳນິຊຳນານ ເພື່ອຍົກປະສິດທິພາບ ແລະ ປະສິດທິຜົນ ໃນການເປັນເສນາທິການ ໃຫ້ແກ່ ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ ເພື່ອຊຸກຍູ້ ການຈັດຕັ້ງປະຕິບັດ ແຜນການ 5 ປີ ສົກປີ 2026-2030, ຍຸດທະສາດ 10 ປີ 2026-2035, ແລະ ວິໄສທັດຮອດ ປີ 2045 ຂອງ ຂະແໜງ ກະສິກຳ ແລະ ສິ່ງແວດລ້ອມ ໃຫ້ບັນລຸຕາມຄາດໝາຍ ໂດຍຈະສຸມໃສ່ວຽກງານດັ່ງນີ້:

II. ໜ້າວຽກຈຸດສຸມ

2.1. ດ້ານການຈັດຕັ້ງ ແລະ ບຸກຄະລາກອນ

1) ຄົ້ນຄວ້າ ແລະ ປັບປຸງ ໃນການກຳນົດ ພາລະບົດບາດ, ໜ້າທີ່ ແລະ ແບ່ງຄວາມຮັບຜິດຊອບ ໃຫ້ແຕ່ລະຂະແໜງ ພາຍໃນ ໃຫ້ມີຄວາມຈັດເຊນຫຼາຍຂຶ້ນ ພ້ອມທັງ ປັບປຸງ ລະບຽບ ຂອງ ການເຮັດວຽກ ໃຫ້ມີຄວາມຄ່ອງຕົວຫຼາຍຂຶ້ນ, ເຮັດໃຫ້ໄວ ແລະ ໂປ່ງໃສ ແນ່ໃສ ຮັບປະກັນ ໃນການສ້າງຫ້ອງການກອງທຶນ ໃຫ້ເປັນອົງກ່ອນແຫ່ງຊາດທີ່ສາມາດເຂົ້າເຖິງແຫຼ່ງທຶນສາກົນໄດ້ໂດຍກົງ;
2) ເອົາໃຈໃສ່ ປັບປຸງ ການກຳນົດຕຳແໜ່ງງານ ໃຫ້ມີຄວາມພ້ອມ ໃນການຈັດຕັ້ງປະຕິບັດ ພາລະບົດ ແລະ ໜ້າທີ່ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ພ້ອມທັງ ປັບປຸງ ຊັບຊ້ອນ ເລືອກເຟັ້ນ ພະນັກງານ ຜູ້ທີ່ມີຄວາມຮູ້ ແລະ ຄວາມສາມາດ ບັນຈຸເຂົ້າຕາມຕຳແໜ່ງງານໃຫ້ມີຄວາມສົມດຸນ ພຽງພໍຕໍ່ກັບຄວາມຕ້ອງການຂັ້ນພື້ນຖານ;
3) ສຳມະນາ ແລະ ແລກປ່ຽນຄຳເຫັນ ຕໍ່ກັບ ພາບລວມ, ກົງຈັກການຈັດຕັ້ງ, ພາລະບົບບາດ ຂອງຂະແໜງຕ່າງໆ, ລະບຽບການ ຄຸ້ມຄອງພະນັກງານ ແລະ ນະໂຍບາຍຕ່າງໆ ຂອງ ກອງທຶນ ໃຫ້ກັບພະນັກງານ ໃໝ່ ແລະ ເກົ່າ ຢ່າງໜ້ອຍ 2 ຄັ້ງຕໍ່ປີ;

4) ສ້າງ ແລະ ຈັດຕັ້ງປະຕິບັດ ແຜນພັດທະນາຊັບພະຍາກອນມະນຸດ ໄລຍະສັ້ນ ແລະ ໄລຍະຍາວ ຂອງ ກອງທຶນ ປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ຍົກລະດັບ ພະນັກງານ ຫ້ອງການ ກອງທຶນ ທຽບເທົ່າສາກົນ ແລະ ກາຍເປັນຊ່ຽວຊານ ສະເພາະດ້ານ;

5) ຈັດຕັ້ງປະຕິບັດແຜນການຝຶກອົບຮົມ ພາຍໃນ ແລະ ຕ່າງປະເທດ ພ້ອມດ້ວຍ ກະກຽມແຜນງົບປະມານ ໃນ ການ ເຂົ້າຮ່ວມ ແລະ ຈັດຝຶກອົບຮົມ ທາງດ້ານວິຊາສະເພາະ ໃນແຕ່ລະຂົງເຂດວຽກງານ. ພ້ອມທັງສ້າງ ລະບົບ ຕິດຕາມ ແລະ ປະເມີນຜົນ ທາງດ້ານມາດຖານ ການຈັດຕັ້ງປະຕິບັດວຽກງານ ຂອງ ພະນັກງານ ຜູ້ທີ່ ໄດ້ຮັບການຝຶກອົບຮົມ;

2.2. ດ້ານການລະດົມທຶນ, ສະສົມທຶນ ແລະ ເກັບລາຍຮັບ

1) ສືບຕໍ່ ເກັບກຳຂໍ້ມູນ ແລະ ປະເມີນ ສັງລວມ ບັນດາໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ມີການ ປະກອບສ່ວນ ພັນທະ ໃນການປົກປັກຮັກສາສິ່ງແວດລ້ອມ ຕາມສັນຍາສຳປະທານ ໃນໄລຍະ 5 ປີຜ່ານມາ ເພື່ອເປັນບ່ອນອີງສ້າງແຜນການລະດົມທຶນ ຈາກແຫຼ່ງທຶນ ຕາມແຫຼ່ງລາຍຮັບທຶນພາຍໃນໄລຍະ 5 ປີ 2026-2030 ໃຫ້ບັນລຸ 47 ລ້ານໂດລາສະຫະລັດ. ໃນນີ້
   - ຄາດຄະເນລະດົມທຶນ ຈາກແຫຼ່ງທຶນ ຕາມແຫຼ່ງລາຍຮັບ ດ້ານສິ່ງແວດລ້ອມ ໃນໄລຍະ 5 ປີ 2026-2030 ໃຫ້ບັນລຸ 19 ລ້ານໂດລາສະຫະລັດ;
   - ຄາດຄະເນລະດົມທຶນບ້ອງງົບປະມານ ຕິດຕາມກວດກາ ວິຊາການດ້ານສິ່ງແວດລ້ອມຂອງບັດາ ໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃນໄລຍະ 5 ປີ 2026-2030 ໃຫ້ບັນລຸ 20.8 ລ້ານໂດລາ ສະຫະລັດ;
   - ຄາດຄະເນລະດົມທຶນບ້ອງງົບປະມານ ຄຸ້ມຄອງອ່າງຮັບນ້ຳ ໃນໄລຍະ 5 ປີ 2026-2030 ໃຫ້ບັນລຸ 460,765 ໂດລາສະຫະລັດ;
   - ຄາດຄະເນເກັບລາຍຮັບ ເຄື່ອງປ່າຂອງດົງ ໃນໄລຍະ 5 ປີ 2026-2030 ໃຫ້ບັນລຸ 50 ຕື້ກວ່າກີບ ຫຼື 2,3 ລ້ານໂດລາສະຫະລັດ;
   - ຄາດຄະເນການເກັບລາຍຮັບບ້ອງ ຟື້ນຟູປ່າ ແລະ ປູກໄມ້ທົດແທນ ຕາມມະຕິສະພາແຫ່ງຊາດ ໃນການ ຫັນປ່ຽນທີ່ດິນຂອງ ໂຄງການລົງທຶນ (ພະລັງງານ ແລະ ບໍ່ແຮ່) ທີ່ມອບຄ່າພັນທະ ໃນໄລຍະ 5 ປີ 2026-2030 ໃຫ້ບັນລຸ 4.5 ລ້ານໂດລາສະຫະລັດ.

2) ຄົ້ນຄວ້າ ແລະ ແລກປ່ຽນບົດຮຽນ ພາຍໃນ ແລະ ຕ່າງປະເທດ ເພື່ອສ້າງກົນໄກ ກົນໄກໃຫມ່ ແລະ ນິຕິກຳ ລຸ່ມກົດໝາຍ ເພື່ອເປັນບ່ອນອີງ ໃນການຈັດຕັ້ງປະຕິບັດແຫຼ່ງລາຍຮັບ ທີ່ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດຜ່ານມາ ເປັນຕົ້ນ: ຄ່າບູລະນະຟື້ນຟູ ສິ່ງແວດລ້ອມ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ, ຄ່າບໍລິການລະບົບ ນິເວດ ແລະ ລາຍຮັບຈາການຂາຍສິນເຊື່ອກາບອນ;

3) ສືບຕໍ່ຕິດຕາມ ແລະ ຊຸກຍູ້ ການປະກອບສ່ວນ ຕາມພັນທະໃນການປົກປັກຮັກສາສິ່ງແວດລ້ອມ ຕາມສັນຍາ ສຳປະທານ (ພະລັງງານ, ບໍ່ແຮ່, ໂຄງລ່າງພື້ນຖານກະສິກຳ-ປ່າໄມ້, ອຸດສະຫະກຳ-ການຄ້າ) ໃຫ້ບັນລຸຄາດ ໝາຍແຜນການປີ ຢ່າງໜ້ອຍ 80% ຂອງແຜນການ ພ້ອມທັງແລກປ່ຽນຂໍ້ມູນແຕ່ລະພາກສ່ວນຢ່າງເປັນ ປົກກະຕິ;

4) ສ້າງຖານຂໍ້ມູນ ແລະ ຫັນເປັນຫັນສະໄໝ ໃນການຕິດຕາມ ປະກອບສ່ວນ ພັນທະ ໃນການປົກປັກຮັກສາ ສິ່ງແວດລ້ອມ ຕາມສັນຍາສຳປະທານ (ພະລັງງານ, ບໍ່ແຮ່, ໂຄງລ່າງພື້ນຖານກະສິກຳ-ປ່າໄມ້, ອຸດສະຫະກຳ-ການຄ້າ) ຮ່ວມກັບ ກະຊວງ ການເງິນ, ກະຊວງ ອຸດສາຫະກຳ ແລະ ການຄ້າ ແລະ ຄະນະກຳມະການ ສົ່ງເສີມ ການລົງທຶນ;

5) ຈັດສັນແບ່ງປັນ ລາຍຮັບດ້ານສິ່ງແວດລ້ອມ ໃນແຕ່ລະປີ ຈຳນວນ 30% ເຂົ້າໄປເພີ່ມໃສ່ ທຶນເງິນຝາກ ຢູ່ ທະນາຄານທຸລະກິດ ໃຫ້ໄດ້ປະມານ 14 ລ້ານໂດລາສະຫະລັດ ໃນປີ 2030 ເພື່ອຮັບປະກັນຄວາມຍືນຍົງ ດ້ານການເງິນ ຂອງ ກອງທຶນ;
6) ເກັບກຳຂໍ້ມູນ ແລະ ປຶກສາຫາລື ແລກປ່ຽນ ໃນການພັດທະນາ ບົດສະເໜີໂຄງການ ເພື່ອສະເໜີຂໍທຶນສາກົນ ເປັນຕົ້ນ: WB, UNDP, GIZ, UNEP, FAO ແລະ GGGI ເພື່ອນຳມາຈັດຕັ້ງປະຕິບັດ ໃນຂົງເຂດວຽກ ງານ ປົກປັກຮັກສາປ່າໄມ້, ຊີວະນາໆພັນ, ລະບົບນິເວດສິ່ງແວດ ລ້ອມ, ລະບົບນິເວດປ່າໄມ້ ແລະ ການຄຸ້ມ ຄອງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ໄດ້ 30 ລ້ານໂດລາ ໃນຮອດປີ 2030;
7) ເກັບກຳຂໍ້ມູນ ແລະ ປັບປຸງ ກົນໄກການປະສານງານ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ໃນການເກັບລາຍຮັບ ຕາມແຫຼ່ງລາຍຮັບ ດ້ານປ່າໄມ້ ຂອງ ກອງທຶນ ໄລຍະຜ່ານມາ ເປັນຕົ້ນ: ລາຍຮັບ ຈາກເຄື່ອງປ່າຂອງດົງ, ພັນທະປຸກໄມ້, ຄ່າປຸກປ່າທົດແທນ ແລະ ຈາກການຂາຍໄມ້ ແລະ ເຄື່ອງປ່າຂອງດົງ ທີ່ຮິບເປັນຂອງລັດ ເພື່ອ ສ້າງເປັນແຜນຄາດຄະເນລາຍຮັບ 05 ປີ 2026-2030 ສູ້ຊົນ ໃຫ້ໄດ້ປະມານ 50 ຕື້ກີບ ຫຼື 2,3 ລ້ານໂດລາ ສະຫະລັດ;
8) ຄົ້ນຄວ້າ ແລະ ແລກປ່ຽນບົດຮຽນ ພາຍໃນ ແລະ ຕ່າງປະເທດ ເພື່ອສ້າງກົນໄກ ໃຫມ່ ແລະ ນິຕິກຳລຸ່ມກົດ ໝາຍ ເພື່ອເປັນບ່ອນອີງ ໃນການຈັດຕັ້ງປະຕິບັດແຫຼ່ງລາຍຮັບ ທີ່ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດຜ່ານມາ ເປັນຕົ້ນ:ລາຍຮັບຈາກການດຳເນີນກິດຈະການທ່ອງທ່ຽວທາງທຳມະຊາດ ແລະ ອື່ນໆ; ການຄ້າຂາຍການ ບອນປ່າໄມ້, ການຈ່າຍຄ່າບໍລິການລະບົບນິເວດປ່າໄມ້;
9) ດຳເນີນການສະເໜີ ຍ້ອງຍໍ ໃນແຕ່ລະຂັ້ນ ແລະ ສະແດງຄວາມຊົມເຊີຍ ຜ່ານສື່ໂຄສະນາ ໃຫ້ແກ່ ບັນ ໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ປະກອບສ່ວນທຶນເຂົ້າ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຕາມພັນທະສັນຍາຕ່າງໆ ຢ່າງເປັນປົກກະຕິຕໍ່ເນື່ອງ;

2.3. ດ້ານການສະໜອງທຶນ ແລະ ການປະຕິບັດລາຍຈ່າຍ

1) ປັບປຸງ ແບບຟອມ ບົດສະເໜີໂຄງການຍ່ອຍ ທີ່ຈະສະເໜີຂໍທຶນພາຍໃນດ້ານສິ່ງແວດລ້ອມ ໃຫ້ມີຄວາມ ເຂົ້າໃຈງ່າຍຂຶ້ນ ແລະ ສ່ອດຄ່ອງກັບ ສະພາບຕົວຈິງໄລຍະໃຫມ່, ພ້ອມທັງ ປັບປຸງ ກົນໄກ ແລະ ຂັ້ນຕອນ ອະນຸມັດ ການສະໜອງທຶນ ຕາມ 8 ຮ່ອງທຶນ ໃຫ້ມີ ວ່ອງໄວ ແລະ ຫຼຸດຂັ້ນຕອນລົງ ເພື່ອທັນກັບສະພາບ ຄວາມຕ້ອງການໃນການນຳໃຊ້ທຶນ;
2) ເກັບກຳຂໍ້ມູນ ແຜນຄວາມຕ້ອງການທຶນ ຂອງ ແຕ່ລະພາກສ່ວນ ພາຍໃນ ຂະແໜງ ກະສິກຳ ແລະ ສິ່ງແວດລ້ອມ ແລະ ຂະແໜງການອື່ນໆປິ່ນອ້ອມ ທີ່ຈະນຳໃຊ້ເຂົ້າໃນ ວຽກງານ ປົກປັກຮັກສາ ສິ່ງແວດລ້ອມ ແລະ ປ່າໄມ້ ແລະ ການຄຸ້ມຄອງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນໄລຍະ 5 ປີ 2026-2030 ເພື່ອເປັນບ່ອນອີງໃນການກຳນົດກອບວຽກບູລິມະສິດ ຂອງ ແຜນສະໜອງທຶນ ພາຍໃນດ້ານ ສິ່ງແວດລ້ອມ ໄປຕາມ 08 ຮ່ອງທຶນ ໃຫ້ໄດ້ 175 ຕື້ກີບ ໃນໄລຍະ 05 ປີ 2026-2030;
3) ຄາດຄະເນແຜນຄວາມຕ້ອງການງົບປະມານຕິດຕາມກວດກາດ້ານສິ່ງແວດລ້ອມ ຂອງ ແຕ່ລະພາກສ່ວນ ພາຍໃນ ຂະແໜງ ກະສິກຳ ແລະ ສິ່ງແວດລ້ອມ ແລະ ຂະແໜງການອື່ນໆປິ່ນອ້ອມ ທີ່ຈະນຳໃຊ້ເຂົ້າໃນ ວຽກ ງານຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນໄລຍະ 5 ປີ 2026-2030 ໃຫ້ໄດ້ 20 ລ້ານໂດລາສະຫະລັດ ແລະ ສະໜອງງົບໃຫ້ການຄຸ້ມຄອງອ່າງຮັບນ້ຳ ໃນ 5 ປີ ຕໍ່ໜ້າ ໃຫ້ໄດ້ 460,765 ໂດລາສະຫະລັດ;
4) ເຜີຍແຜ່ ແລະ ໂຄສະນາ ແຜນສະໜອງທຶນ ພາຍໃນດ້ານສິ່ງແວດລ້ອມ ໃນໄລຍະ 5 ປີ 2026-2030 ໃຫ້ແກ່ ພາກສ່ວນສູນກາງ ແລະ ທ້ອງຖິ່ນ ຂົງເຂດບູລິມະສິດ ຢ່າງໜ້ອຍ 2 ຄັ້ງຕໍ່ປີ; ພ້ອມທັງ ສ້າງຄວາມເຂັ້ມແຂງ ໃຫ້ແກ່ ພາກສ່ວນສູນກາງ ແລະ ທ້ອງຖິ່ນ ຂອງແຕ່ລະ ຂະແໜງ ການ ໃນການຂຽນບົດສະເໜີໂຄງການ ຍ່ອຍ ຂໍທຶນພາຍໃນດ້ານສິ່ງແວດລ້ອມ ຂອງ ກອງທຶນ ຕາມ 8 ຮ່ອງທຶນ ຢ່າງໜ້ອຍ 2 ຄັ້ງຕໍ່ປີ;

5) ຄົ້ນຄວ້າ ແລະ ປະກອບເຫັນ ຕໍ່ກັບ ບົດສະເໜີໂຄງການຍ່ອຍທຶນພາຍໃນ ດ້ານສິ່ງແວດລ້ອມ ຂອງ ກອງທຶນ ຕາມ 8 ຮ່ອງທຶນ ຢ່າງເປັນປົກກະຕິ ແລະ ຮັບປະກັນຄວາມວ່ອງໄວຂຶ້ນ, ພ້ອມທັງ ດຳເນີນ ຂັ້ນຕອນ ສະເໜີ ຄະນະວິຊາການ ຂອງ ກອງທຶນ ພິຈາລະນະ ປະເມີນໃຫ້ຄະແນນ ທາງດ້ານຫຼັກການ ຢ່າງໜ່ອຍ 2 ຄັ້ງຕໍ່ປີ;

6) ນຳສະເໜີ ບົດສະເໜີໂຄງການຍ່ອຍທຶນພາຍໃນດ້ານສິ່ງແວດລ້ອມ ຂອງ ກອງທຶນ ຕາມ 8 ຮ່ອງທຶນ ໃຫ້ແກ່ ສະພາບໍລິຫານ ກອງທຶນ ພິຈາລະນາ ອະນຸມັດສະໜອງທຶນ ຢ່າງໜ່ອຍ 2 ຄັ້ງຕໍ່ປີ ເພື່ອໃຫ້ບັນລຸ ສະໜອງທຶນ ໃຫ້ໄດ້ຢ່າງໜ່ອຍ 35 ຕື່ກີບຕໍ່ປີ;

7) ປະສານສົມທົບ ກົມປ່າໄມ້ ແລະ ພະແນກ ກະສິກຳ ແລະ ສິ່ງແວດລ້ອມ ແຂວງ ແລະ ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ ເມືອງ ຂອບເຂດທົ່ວປະເທດ ເພື່ອຊຸກຍູ້ ປະຕິບັດລາຍຈ່າຍ ງົບປະມານ ແຫຼ່ງທຶນດ້ານ ປ່າໄມ້ ເຂົ້າໃນວຽກງານ ບູລິມາສິດ ໃນການຄຸ້ມຄອງ ປ່າໄມ້ ແລະ ເຄື່ອງປ່າຂອງດົງ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນໃນ 5 ປີ (2021-2030) ໃຫ້ໄດ້ 50 ຕື້ກີບ ຫລື 10 ຕື້ກີບຕໍ່ປີ;

8) ປະສານສົມທົບ ກົມປ່າໄມ້ ແລະ ພະແນກ ກະສິກຳ ແລະ ສິ່ງແວດລ້ອມ ແຂວງ ແລະ ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ ເມືອງ ຂອບເຂດທົ່ວປະເທດ ໃນການສ້າງແຜນເບີກຈ່າຍງົບປະມານ ທີ່ໄດ້ຮັບຈາກການ ປະຕິບັດພັນທະດ້ານປ່າໄມ້ ໃນການຫັນປ່ຽນທີ່ດິນປ່າໄມ້ ເຂົ້າໃນວຽກງານ ຟື້ນຟູປ່າ, ປູກປ່າທົດແທນ, ຟື້ນ ຟູຊີວະນາໆພັນ ແລະ ຟື້ນຟ ລະບົບນິເວດປ່າໄມ້ ໃຫ້ບັນລຸຕາມຄາດໝາຍ ຂອງ ແຕ່ລະໂຄງການ ໃນ 5 ປີ 2026-2030 ຈຳນວນ 4 ລ້ານໂດລາສະຫະລັດ ຫລື 8ແສນໂດລາສະຫະລັດຕໍ່ປີ;

9) ສ້າງຄວາມເຂັ້ມແຂງ ໃຫ້ແກ່ ພາກສ່ວນ ສູນກາງ ແລະ ທ້ອງຖິ່ນ ທີ່ໄດ້ຮັບການສະໜອງທຶນ ແລະ ມີແຜນ ເບີກຈ່າຍງົບປະມານ ຜ່ານຂອງກອງທຶນ ໃຫ້ເຂົ້າໃຈໃນການຄຸ້ມຄອງການເງິນ, ການຂຶ້ນແຜນຄິດໄລ່ ງົບປະມານ, ການປະກອບເອກະສານຂໍຖອນງົບປະມານ ແລະ ລະບຽບຂັ້ນຕອນ ການຈັດຊື້-ຈັດຈ້າງ ຢ່າງ ໜ້ອຍ 2 ຄັ້ງຕໍ່;

10) ປັບປຸງ ແລະ ພັດທະນາ ລະບົບການຄຸ້ມຄອງການເງິນ ແບບທັນສະໄໝ ເພື່ອເພີ່ມທະວີ ຄວາມສະດວກສະ ບ່າຍ ໃນການປະສານງານ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ແລະ ປັບປຸງ ລະບົບໂປແກຼມບັນຊີ ທຶນພາຍໃນ ແລະ ສາກົນ ພາຍໃນ ກອງທຶນ;

11) ແລກປ່ຽນບົດຮຽນ ໃນການປະຕິບັດ ກົນໄກການສະໜອງທຶນ ແລະ ການປະຕິບັດລາຍຈ່າຍ ທຶນພາຍໃນ ຂອງ ກອງທຶນ ຮ່ວມກັບ ພາກສ່ວນ ຂະແໜງ ການເງິນ ຢູ່ຂັ້ນ ສູນກາງ ແລະ ທ້ອງຖິ່ນ ຢ່າງເປັນປົກກະຕິ ເພື່ອປັບປຸງແກ້ໄຂ ຂອດການເບີກຈ່າຍເງິນ ໃຫ້ມີຄວາມວ່ອງໄວຂຶ້ນກ່ອນເກົ່າ;

2.4. ດ້ານການກວດກາ, ຕິດຕາມ ແລະ ປະເມີນຜົນ ການນຳໃຊ້ທຶນ

1) ສ້າງຄະນະຮັບຜິດຊອບ ແລະ ຄະນະປະສານງານ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ໃນການຄຸ້ມຄອງ ການ ນຳໃຊ້ທຶນ ຈາກ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໄດ້ສະໜອງທຶນ ແລະ ເບີກຈ່າຍ ງົບປະມານ ເພື່ອເພີ່ມທະວີຂອດການປະສານງານລວມສູນ;

2) ປັບປຸງ ແບບຟອມ ບົດລາຍງານ ການຈັດຕັ້ງປະຕິບັດ ໂຄງການຍ່ອຍນຳໃຊ້ທຶນພາຍໃນດ້ານສິ່ງແວດລ້ອມ, ບົດລາຍງານ ການຈັດຕັ້ງປະຕິບັດກິດຈະກຳ ຂອງ ງົບປະມານທີ່ໄດ້ຮັບການຈັດສັນແບ່ງບັນປະຈຳປີ, ຕິດຕາມກວດຜົນໄດ້ຮັບ ແລະ ປະເມີນຜົນໄດ້ຮັບຕາມຕົວຊີ້ວັດໃນແຕ່ລະໄລຍະ ໃຫ້ມີຄວາມສະດວກສະ ບ່າຍ ແລະ ເຂົ້າໃຈງ່າຍ;

3) ຝຶກອົບຮົມ ແລະ ສ້າງຄວາມເຂັ້ມ ໃຫ້ແກ່ ພະນັກງານພາຍໃນ ແລະ ຜູ້ຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ຈັດຕັ້ງປະຕິບັດກິດຈະກຳ ທີ່ໄດ້ຮັບທຶນຈາກກອງທຶນ ໃຫ້ເຂົ້າໃຈ ກ່ຽວກັບ ຂັ້ນຕອນ ແລະ ວິທີການ ໃນ ການຕິດຕາມ ແລະ ປະເມີນຜົນ ໃນແຕ່ລະໄລຍະ ໃຫ້ໄດ້ 2 ຄັ້ງຕໍ່ປີ;

4) ແລກປ່ຽນບົດຮຽນ ພາຍໃນ ແລະ ຕ່າງປະເທດ ໃນການຈັດຕັ້ງປະຕິບັດວຽກງານ ກວດກາ, ຕິດຕາມ ແລະ ປະເມີນຜົນ ເພື່ອປັບປຸງແກ້ໄຂຂໍ້ຄົງຄ້າງ ໃນການປະຕິບັດວຽກງານຕົວຈິງໃນແຕ່ລະໄລຍະ ໃຫ້ໄດ້ 1 ຄັ້ງຕໍ່ປີ;

5) ລົງຊຸກຍູ້, ຕິດຕາມ ແລະ ສະໜັບສະໜຸນດ້ານວິຊາການ ການຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ການນຳໃຊ້ທຶນ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຢ່າງໜ້ອຍ 2 ຄັ້ງຕໍ່ປີ ເພື່ອຮ່ວມແກ້ໄຂບັນຫາຂໍ້ຄົງຄ້າງໃນແຕ່ລະໄລຍະ ໃຫ້ທັນກັບສະພາບການ;

6) ດຳເນີນຂະບວນການປະເມີນຜົນ ກ່ອນຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ກ່ອນໄດ້ຮັບທຶນຈັດສັນ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ເພື່ອເປັນຂໍ້ມູນພື້ນຖານເບື້ອງຕົ້ນ ໃນການປະເມີນຜົນ ກ່ອນ ແລະ ຫຼັງ ພາຍຫຼັງນຳໃຊ້ທຶນ;

7) ດຳນີນຂະບວນການປະເມີນຜົນ ປະຈຳປີ, ກາງສະໄໝ ແລະ ໄລຍະປິດໂຄງການຍ່ອຍ ແລະ ການນຳໃຊ້ທຶນ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃຫ້ໄດ້ 1 ຄັ້ງຕໍ່ປີ ພ້ອມທັງ ສ້າງບົດລາຍງານ ຕິດຕາມ ແລະ ປະເມີນຜົນ ສະເພາະໂຄງການ ແລະ ອັນລວມ ປະຈຳປີ ຢ່າງເປັນປົກກະຕິ;

8) ປັບປຸງ ແລະ ພັດທະນາ ລະບົບຕິດຕາມ ແລະ ປະເມີນຜົນ ໃນການຈັດຕັ້ງປະຕິບັດ ກິດຈະກຳຕ່າງໆ ໃນການນຳໃຊ້ທຶນ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃຫ້ເປັນລະບົບທັນສະໄໝ, ເພີ່ມທະວີຄວາມສະດວກໃນການບັນທຶກຂໍ້ມູນລາຍງານ ແລະ ເກັບຮັກສາຂໍ້ມູນໃນລະບົບທັນສະໄໝ;

9) ສັງລວມ ຜົນໄດ້ຮັບ ແລະ ຜະລິດຕະພັນ ທີ່ເກີດຂຶ້ນຈາກ ການສະໜອງທຶນ ແລະ ນຳໃຊ້ທຶນ ຂອງ ກອງທຶນ ປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃນແຕ່ລະປີ ເພື່ອໂຄສະນາ ເຜີຍແຜ່ ຜົນງານ ແລະ ຜົນໄດ້ຮັບ ໃນການນຳໃຫ້ທຶນ ໃຫ້ແກ່ພາກສ່ວນອື່ນຮັບຮູ້ຢ່າງກວ້າງຂວາງ;

2.5. ດ້ານການຮ່ວມມື ແລະ ການຫັນເປັນຄູ່ຮ່ວມງານ

1) ສືບຕໍ່ ເພີ່ມທະວີການຮ່ວມມື ແລະ ຫັນເປັນຄູ່ຮ່ວມງານ ກັບ ພາກສ່ວນຕ່າງໆ ໃຫ້ກວ້າງຂວາງ ເຊັ່ນ: ມະຫາວິທະຍາໄລແຫ່ງຊາດ ແລະ ປະຈຳພາກ, ບັນດາ ກະຊວງກ່ຽວຂ້ອງ, ອົງການຈັດຕັ້ງມະຫາຊົນ, ຊຸມຊົນ ທ້ອງຖິ່ນ ແລະ ສືບຕໍ່ເປັນຄູ່ຮ່ວມງານ ກັບອົງການຈັດຕັ້ງສາກົນຕ່າງໆໃຫ້ຍືນຍົງເຊັ່ນ: WB, UNDP, GIZ, UNEP, FAO ແລະ GGGI.

2) ເພີ່ມທະວີສາຍພົວພັນກັບ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ (GCF) ເພື່ອສ້າງຄວາມເຂັ້ມແຂງໃຫ້ ກປສ ກາຍເປັນ ອົງກອນທີ່ສາມາດເຂົ້າຫາແຫຼ່ງທຶນໄດ້ ໂດຍກົງ;

2.6. ຄາດຄະເນ ແຫຼ່ງທຶນ ນຳໃຊ້ເຂົ້າໃນຈັດຕັ້ງປະຕິບັດ

ການຈັດຕັ້ງປະຕິບັດ ແຜນພັດທະນາ 5 ປີ (2026-2030) ວຽກງານ ກອງທຶນປົກປັກຮັກສາສິ່ງແວດ ລ້ອມ ແລະ ປ່າໄມ້ ໄດ້ມີການຄາດຄະເນ ຄວາມຕ້ອງການດ້ານງົບປະມານ ທັງໝົດ ຈຳນວນ 40-46 ລ້ານໂດລາສະຫະລັດ ໂດຍຈະກຳນົດເປັນ ແຜນດຳເນີນງານລະອຽດ ໃນແຕ່ລະປີ. ສຳລັບ ງົບປະມານ ແມ່ນຈະນຳໃຊ້ ຈາກແຫຼ່ງ ທຶນພາຍໃນ ຂອງ ກອງທຶນປົກປັກຮັກສິ່ງແວດລ້ອມ ແລະ ປ່າໄມ້ ທີ່ໄດ້ມີການຈັດສັນແບ່ງບັນຕາມສັດສ່ວນ ໃນການປະຕິບັດ ລາຍຮັບໄດ້ ໃນແຕ່ລະປີ ຂອງຕົນເອງ ແລະ ງົບປະມານ ອີກສ່ວນໜຶ່ງ ແມ່ນນຳໃຊ້ຈາກ ລາຍຮັບຄ່າບໍລິການ ທີ່ ຫ້ອງການກອງທຶນ ໄດ້ໃຫ້ການບໍລິການ ຄຸ້ມຄອງດ້ານການເງິນ ແລະ ການຄຸ້ມຄອງວຽກງານຈັດຊື-ຈັດຈ້າງ ຂອງ ບັນດາ ໂຄງການສາກົນ ທີ່ມີຢູ່ປະຈຸບັນ ແລະ ເກີດຂຶ້ນໃນອານິດ ພ້ອມທັງ ຈະໄດ້ລະດົມຂົນຂວາຍ ການຊ່ວຍເຫຼືອ ຈາກສາກົນ ແລະ ຄູ່ຮ່ວມງານ ເປັນຕົ້ນ : WB, UNDP, GIZ, UNEP, FAO, GCF ແລະ ອື່ນໆ;

III. ມາດຕະການຈັດຕັ້ງປະຕິບັດ

ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນການ ໃນໄລຍະ 5 ປີ (2026-2030) ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ຫ້ອງການກອງທຶນໄດ້ກຳນົດມາດຕະການໃນການຈັດຕັ້ງປະຕິບັດດັ່ງນີ້:

1) ເພີ່ມທະວີການສຶກສາອົບຮົມດ້ານການເມືອງແນວຄິດ ໃຫ້ແທດເຖິງຕົວຈິງດ້ວຍຫຼາຍວິທີ, ຫຼາຍຮູບການ ທີ່ມີສີສັນ, ມີຄວາມສາມັກຄີພາຍໃນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ;

2) ສືບຕໍ່ຜັນຂະຫຍາຍ ໜ້າວຽກຈຸດສຸມ ໃຫ້ເປັນແຜນວຽກລະອຽດ, ມີການແບ່ງວຽກຢ່າງເດັດຂາດ, ມີການຊຸກຍູ້, ຕິດຕາມ, ກວດກາ ຖອດຖອນບົດຮຽນ ເພື່ອປັບປຸງ ແກ້ໄຂ ບັນຫາ ໃນການຈັດຕັ້ງປະຕິບັດໃນແຕ່ລະໄລຍະ;
3) ເຜີຍແຜ່, ເຊື່ອມຊຶມ ໃຫ້ພະນັກງານ ມີຄວາມເຂົ້າໃຈ ກ່ຽວກັບ ວຽກງານ ຂອງຕົນ ແລະ ສ້າງເງື່ອນໄຂ ໃນຍົກລະດັບສະເພາະດ້ານວິຊາການ, ຄັດເລືອກ ແລະ ຊັບຊ້ອນ ຜູ້ທີ່ມີຄວາມຮູ້, ຄວາມສາມາດ, ມີປະສົບການ ໃຫ້ສອດຄ່ອງ ກັບຫຼັກວິຊາສະເພາະ ຕາມກຳນົດຕຳແໜ່ງງານ.

ແຜນຄາດຄະເນ ລາຍຮັບວິຊາການ (ທຶນພາຍໃນ) ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ 2026-2030

ລຳດັບ	ເນື້ອໃນລາຍການ	ຕົວເລກປະຕິບັດ ໃນປີ 2025(ໂດລາ)	ຄາດຄະເນ ລາຍຮັບ ປີ 2026-2030		2026	2027	2028	2029	2030
			(ກີບ)	(ໂດລາ)					
	ຂ	1	2	3					
*	ລາຍຮັບວິຊາການ ບໍ່ລວມນຳໃຊ້-ອາກອນ								
I.	ລາຍຮັບບົວໆ ກປຂ	$ 5,395,522.17	413,104,693,663	$19,034,451.17	$3,699,689.22	$3,773,236.81	$3,864,802.60	$3,823,292.50	$3,872,092.50
1.1	ດອກເບ້ຍເງິນຝາກທະນາຄານມີກຳນົດ ຢູ່ທະນາຄານຫຼະຕີດ	$ 598,095.70	87,983,962,000	$4,054,000.00	$713,200.00	$762,000.00	$810,800.00	$859,600.00	$908,400.00
1.2	ໂຄງການເງິນກູ້	$7,730.41	3,479,354,162	$160,316.74	$22,462.33	$47,544.31	$90,310.10	$0.00	$0.00
1.2.1	ດອກເບ້ຍ ການປ່ອຍກູ້ (ໄລຍະຜ່ານມາ)	-	609,354,162.00	$28,076.96	$4,492.47	$6,996.92	$16,587.57	$0.00	$0.00
1.2.2	ຕົ້ນທຶນການປ່ອຍກູ້ (ໄລຍະຜ່ານມາ)	$7,730.41	2,870,000,000	$132,239.78	$17,969.87	$40,547.39	$73,722.53	$0.00	$0.00
1.3	ປະກອບສ່ວນ ວຽກງານ ປົກປັກຮັກສາສິ່ງແວດລ້ອມ	$2,390,982.82	321,641,377,501	$14,820,134.43	$2,964,026.89	$2,963,692.50	$2,963,692.50	$2,963,692.50	$2,963,692.50
1.3.1	ປະກອບສ່ວນ ພັນທະກຳສິ່ງແວດລ້ອມ ຂອງ ໂຄງການບໍ່ແຮ່	$1,842,496.24	186,692,075,986	$8,602,132.24	$1,720,426.45	$1,720,426.45	$1,720,426.45	$1,720,426.45	$1,720,426.45
1.3.2	ປະກອບສ່ວນ ພັນທະກຳສິ່ງແວດລ້ອມ ຂອງ ໂຄງການໄຟຟ້າ	$545,586.58	134,018,242,815	$6,175,102.19	$1,235,020.44	$1,235,020.44	$1,235,020.44	$1,235,020.44	$1,235,020.44
1.3.3	ປະກອບສ່ວນ ພັນທະກຳສິ່ງແວດລ້ອມ ຂອງ ໂຄງການ ກໍ່ສ້າງຝັ່ນຖນໂຄງລ່ຽ, ກະສິກຳ ແລະ ປ່າໄມ້	$2,900.00	931,058,700	$42,900.00	$8,580.00	$8,245.61	$8,245.61	$8,245.61	$8,245.61
1.3.4	ປະກອບສ່ວນ ພັນທະກຳສິ່ງແວດລ້ອມ ຂອງ ໂຄງການ ອຸດສາຫະກຳ ແລະ ການຄ້າ	$0.00	-	$0.00	$0.00	$0.00	$0.00	$0.00	$0.00
II.	ລາຍຮັບບົວໆ ຈິຍປະມານຕິດຕາກວດກາສິ່ງແວດລ້ອມ ຂອງ ຍັນດາໂຄງການລົງທຶນ	$ 2,240,945.25	452,138,337,245	$ 20,832,987.94	$ 4,166,597.59	$ 4,166,597.59	$ 4,166,597.59	$ 4,166,597.59	$ 4,166,597.59
2.1	ດອກເບ້ຍເງິນຝາກທະນາຄານມີກຳນົດ (1,5 ຈຳນວນໂດລາສະຫະລັດ)	$ 22,812.33	9,793,109,799	$ 451,233.00	$90,246.60	90,247	90,247	90,247	90,247
2.2	ຍັນດາໂຄງການລົງທຶນ ແລະ ກິດຈະການຕ່າງໆ	$2,218,132.92	442,345,227,446.19	$20,381,754.94	$4,076,350.99	$4,076,350.99	$4,076,350.99	$4,076,350.99	$4,076,350.99
2.2.1	ໂຄງການ ເຂື່ອນໄຟຟ້າ	$739,393.28	192,136,549,257	$8,852,994.94	$1,770,598.99	$ 1,770,598.99	$ 1,770,598.99	$ 1,770,598.99	$ 1,770,598.99
2.2.2	ໂຄງການ ຝັ່ນຖນ ໂຄງລ່ຽ	$1,278,768.95	143,681,733,125	$6,620,362.77	$1,324,072.55	$ 1,324,072.55	$ 1,324,072.55	$ 1,324,072.55	$ 1,324,072.55
2.2.3	ໂຄງການ ບໍ່ແຮ່ ແລະ ອຸດສາຫະກຳ	$130,061.45	67,461,482,718	$3,108,394.36	$621,678.87	$ 621,678.87	$ 621,678.87	$ 621,678.87	$ 621,678.87
2.2.4	ໂຄງການ ກະສິກຳປ່າໄມ້	$69,909.23	39,065,462,346	$1,800,002.87	$360,000.57	$ 360,000.57	$ 360,000.57	$ 360,000.57	$ 360,000.57
III.	ລາຍຮັບບົວໆ ຈິຍປະມານ ຄຸ້ມຄອງຊຳຍັບນ້ຳ	$ 45,821.98	10,000,000,000	$ 460,765.79	$ 92,153.16	$ 92,153.16	$ 92,153.16	$ 92,153.16	$ 92,153.16
3.1	ໂຄງການ ເຂື່ອນໄຟຟ້າ ແລະວົງງານນ້ຳ	$45,821.98	10,000,000,000	$460,765.79	$ 92,153.16	$ 92,153.16	$ 92,153.16	$ 92,153.16	$ 92,153.16
IV	ລາຍຮັບບົວໆ ເຄື່ອງປ່າຂອງດົງ	$ 498,764.87	50,066,778,100	$ 2,306,905.87	$ 461,381.17	$ 465,373.45	$ 465,373.45	$ 465,373.45	$ 465,373.45
4.1	ເຄື່ອງປ່າຂອງດົງ ຂຶ້ນທ້ອງຖິ່ນ	$498,764.87	50,066,778,100	$2,306,905.87	$ 461,381.17	$ 465,373.45	$ 465,373.45	$ 465,373.45	$ 465,373.45
V	ລາຍຮັບບົວໆ ຝຶ້ນຟູປ່າ ແລະ ປູກໄມ້ ທົດແທນ (ມະຕິສະພາແຫ່ງຊາດ)	$ 1,503,750.09	97,663,500,000	$ 4,500,000.00	$ 800,000.00	$ 850,000.00	$ 900,000.00	$ 950,000.00	$ 1,000,000.00
5.1	ຝຶ້ນຟູປ່າ ແລະ ປູກໄມ້ ທົດແທນ (ມະຕິສະພາແຫ່ງຊາດ)	$ 1,503,750.09	97,663,500,000	$ 4,500,000.00	$ 800,000.00	$ 850,000.00	$ 900,000.00	$ 950,000.00	$ 1,000,000.00
ລວມລາຍຮັບທັງໝົດ I+II+III+IV+V		$ 9,684,804.36	1,022,973,309,008.59	$ 47,135,110.77	$ 9,219,821.14	$ 9,347,361.01	$ 9,488,926.79	$ 9,497,416.70	$ 9,596,216.70

ໝາຍເຫດ: ອັດຕາແລກປ່ຽນ : 21,703 ກີບຕໍ່ໂດລາ

ແຜນຈັດສັນສະໜອງທຶນພາຍໃນ 5 ປີ (2026-2030) ຕາມບຸລິມະສິດ 8 ຮ່ວງທຶນ ຂອງ ກສປ

ລ/ດ	ຮ່ວງທຶນໂຄງການ	ເປີເຊັນ ແບ່ງສັດສ່ວນສະໜອງທຶນ	ປີ 2026 ຈຳນວນເງິນ (ກີບ)	ປີ 2027 ຈຳນວນເງິນ (ກີບ)	ປີ 2028 ຈຳນວນເງິນ (ກີບ)	ປີ 2029 ຈຳນວນເງິນ (ກີບ)	ປີ 2030 ຈຳນວນເງິນ (ກີບ)	ລວມຮ່ວງທຶນ	ສະເລ່ຍຕໍ່ປີ	5 ປີ/USD
			1	2	3	4	5	1+2+3+4+5		
		100%	30,000,000,000	33,000,000,000	35,000,000,000	37,000,000,000	40,000,000,000	175,000,000,000	35,000,000,000	8,063,401
1	ຮ່ວງທຶນ ນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ;	10%	3,000,000,000	3,300,000,000	3,500,000,000	3,700,000,000	4,000,000,000	**17,500,000,000**	3,500,000,000	806,340
2	ຮ່ວງທຶນ ອະນຸລັກຊີວະນາໆພັນ;	10%	3,000,000,000	3,300,000,000	3,500,000,000	3,700,000,000	4,000,000,000	**17,500,000,000**	3,500,000,000	806,340
3	ຮ່ວງທຶນ ສິ່ງແວດລ້ອມ, ການຄວບຄຸມ ແລະ ແກ້ໄຂມົນລະພິດ;	20%	6,000,000,000	6,600,000,000	7,000,000,000	7,400,000,000	8,000,000,000	**35,000,000,000**	7,000,000,000	1,612,680
4	ຮ່ວງທຶນ ການຄຸ້ມຄອງຊັບພະຍາກອນນ້ຳແບບຍືນຍົງ;	15%	4,500,000,000	4,950,000,000	5,250,000,000	5,550,000,000	6,000,000,000	**26,250,000,000**	5,250,000,000	1,209,510
5	ຮ່ວງທຶນ ການຄຸ້ມຄອງທີ່ດິນແບບຍືນຍົງ;	15%	4,500,000,000	4,950,000,000	5,250,000,000	5,550,000,000	6,000,000,000	**26,250,000,000**	5,250,000,000	1,209,510
6	ຮ່ວງທຶນ ການປ່ຽນແປງດິນຟ້າອາກາດ;	10%	3,000,000,000	3,300,000,000	3,500,000,000	3,700,000,000	4,000,000,000	**17,500,000,000**	3,500,000,000	806,340
7	ຮ່ວງທຶນ ການຄຸ້ມຄອງ ລະບົບນິເວດ ແລະ ການພັດທະນາໂຄ່ງລາງພື້ນຖານຂະໜາດນ້ອຍ ໃນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ;	10%	3,000,000,000	3,300,000,000	3,500,000,000	3,700,000,000	4,000,000,000	**17,500,000,000**	3,500,000,000	806,340
8	ຮ່ວງທຶນ ກະສິກຳສະອາດ ແລະ ເປັນມິດຕໍ່ສິ່ງແວດລ້ອມ;	10%	3,000,000,000	3,300,000,000	3,500,000,000	3,700,000,000	4,000,000,000	**17,500,000,000**	3,500,000,000	806,340
	ລວມທັ້ງໝົດ (ກີບ)	**100%**	**30,000,000,000**	**33,000,000,000**	**35,000,000,000**	**37,000,000,000**	**40,000,000,000**	**175,000,000,000**	**35,000,000,000**	**8,063,401**

ອັດຕາແລກປ່ຽນ (21,703)